# ສາລະບານ


**ໝວດທີ 1 ບົດບັນຍັດທົ່ວໄປ ........ 1**

ມາດຕາ 1 ຈຸດປະສົງ ........ 1

ມາດຕາ 2 ການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ ........ 2

ມາດຕາ 3 ການອະທິບາຍຄໍາສັບ ........ 2

ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບ ວຽກງານລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ ........ 5

ມາດຕາ 5 ຫຼັກການກ່ຽວກັບວຽກງານລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ ........ 5

ມາດຕາ 6 ຂອບເຂດການນໍາໃຊ້ ........ 5

ມາດຕາ 7 ການຮ່ວມມືສາກົນ ........ 5

**ໝວດທີ 2 ຮູບການ, ຮູບແບບ, ລັກສະນະ ແລະ ການກໍານົດເອົາ ຮູບແບບ ແລະອາຍຸສັນຍາ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ........ 6**

ມາດຕາ 8 ຮູບການ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ........ 6

ມາດຕາ 9 ຮູບການລັດປະກອບທຶນສົມທົບເຂົ້າໂດຍກົງໃນການພັດທະນາໂຄງການ ........ 6

ມາດຕາ 10 ຮູບການລັດບໍ່ປະກອບທຶນສົມທົບເຂົ້າໂດຍກົງ ........ 6

ມາດຕາ 11 ຮູບແບບລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ........ 6

ມາດຕາ 12 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ອອກ ແບບ, ກໍ່ສ້າງ, ສະ ໜອງທຶນ ແລະ ດໍາເນີນງານ (DBFO) ........ 7

ມາດຕາ 13 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ອອກແບບ, ກໍ່ສ້າງ ແລະ ດໍາເນີນງາ (DBO) ........ 7

ມາດຕາ 14 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ດໍາເນີນງານ ແລະ ມອບໂອນ (BOT) ........ 7

ມາດຕາ 15 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ເປັນເຈົ້າຂອງ, ດໍາເນີນງານ ແລະ ມອບໂອນ (BOOT) ........ 8

ມາດຕາ 16 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ເປັນເຈົ້າຂອງ ແລະ ດໍາເນີນງານ (BOO) ........ 8

ມາດຕາ 17 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ມອບໂອນ ແລະ ດໍາເນີນງານ (BTO) ........ 8

ມາດຕາ 18 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ເຊົ່າ ແລະ ມອບ ໂອນ (BLT) ........ 8

ມາດຕາ 19 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ ແລະ ມອບໂອນ (BT) ........ 9

ມາດຕາ 20 ລັກສະນະ ຂອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ........ 9

ມາດຕາ 21 ການກຳນົດເອົາ ຮູບແບບ ແລະ ອາຍຸສັນຍາ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ....9

**ໝວດທີ 3 ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ແລະຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ .... 9**

ມາດຕາ 22 ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ....10

ມາດຕາ 23 ສິດ ແລະ ໜ້າທີ່ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ....10

ມາດຕາ 24 ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ....10

ມາດຕາ 25 ສິດ ແລະ ໜ້າທີ່ ຂອງຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ....11

**ໝວດທີ 4 ການກະກຽມ ແລະ ການອະນຸມັດໂຄງການລົງທຶນຮ່ວມ ລະຫວ່າງພາກລັດ ແລະ ເອກະຊົນ.....12**

ມາດຕາ 26 ບົດສະເໜີເບື້ອງຕົ້ນ ຂອງໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ....12

ມາດຕາ 27 ການສະເໜີ ແລະ ການພິຈາລະນາໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ 12

ມາດຕາ 28 ບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ ເຕັກນິກ ຂອງ ໂຄງການລົງທຶນຮ່ວມລະຫວ່າງ-ພາກລັດ ແລະ ພາກເອກະຊົນ....12

ມາດຕາ 29 ການສະເໜີ ແລະ ການພິຈາລະນາ ບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ ເຕັກນິກ-ຂອງໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ....13

ມາດຕາ 30 ເງື່ອນໄຂ ແນວຄວາມຄິດລິເລີ່ມ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ 14

ມາດຕາ 31 ການສະເໜີ ແລະ ການພິຈາລະນາ ແນວຄວາມຄິດລິເລີ່ມ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ....14

**ໝວດທີ 5 ການປະມູນໂຄງການ....15**

ມາດຕາ 32 ການປະມູນໂຄງການ....15

ມາດຕາ 33 ຫຼັກການ ການປະມູນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ....15

ມາດຕາ 34 ຊຸດເອກະສານປະມູນ....16

ມາດຕາ 35 ຂັ້ນຕອນການປະມູນ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ....16

ມາດຕາ 36 ການປະເມີນການປະມູນ....16

**ໝວດທີ 6 ສັນຍາໂຄງການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ....17**

ມາດຕາ 37 ສັນຍາການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ ....17

ມາດຕາ 38 ເນື້ອໃນຂອງສັນຍາລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ....17

**ໝວດທີ 7 ການພິຈາລະນາສັນຍາ, ການເຊັນສັນຍາ ແລະ ການປ່ຽນແປງສັນຍາ....18**

ມາດຕາ 39 ຂັ້ນຕອນການພິຈາລະນາສັນຍາ....18

ມາດຕາ 40 ຂັ້ນຕອນການເຊັນສັນຍາ....19

ມາດຕາ 41 ການປ່ຽນແປງ ຫຼື ການດັດແກ້ສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ 19

**ໝວດທີ 8 ການຮັບປະກັນ ແລະ ການຄໍ້າປະກັນ ..... 20**

ມາດຕາ 42 ການຮັບປະກັນ ..... 20

ມາດຕາ 43 ການຄໍ້າປະກັນ ..... 20

ມາດຕາ 44 ການຮັກສາຄວາມລັບ ..... 20

**ໝວດທີ 9 ການຈັດຕັ້ງປະຕິບັດ, ສິດ ແລະ ໜ້າທີ່ ຂອງຜູ້ຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ..... 21**

ມາດຕາ 45 ອີງການຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ..... 21

ມາດຕາ 46 ສິດ ແລະ ໜ້າທີ່ ຂອງເຈົ້າຂອງໂຄງການ ..... 21

ມາດຕາ 47 ສິດ ແລະ ໜ້າທີ່ ຂອງ ຄະນະກຳມະການປະມູນ ..... 22

ມາດຕາ 48 ສິດ ແລະ ໜ້າທີ່ ຂອງພາກເອກະຊົນ ..... 23

**ໝວດທີ 10 ການສະໜັບສະໜູນຂອງລັດຖະບານ ..... 23**

ມາດຕາ 49 ການສະໜັບສະໜູນຂອງລັດຖະບານ ..... 23

ມາດຕາ 50 ການສະໜັບສະໜູນທາງດ້ານນິຕິກຳ ..... 24

ມາດຕາ 51 ການສະໜັບສະໜູນທາງດ້ານການເງິນ ..... 24

ມາດຕາ 52 ການສະໜັບສະໜູນທາງດ້ານນະໂຍບາຍສົ່ງເສີມ ..... 25

ມາດຕາ 53 ການສົ່ງເສີມວິສາຫະກິດ, ຜະລິດຕະພັນ ແລະ ການບໍລິການພາຍໃນ ..... 25

**ໝວດທີ 11 ຂໍ້ຫ້າມ ..... 25**

ມາດຕາ 54 ຂໍ້ຫ້າມທົ່ວໄປ ..... 25

ມາດຕາ 55 ຂໍ້ຫ້າມ ສຳລັບ ເຈົ້າຂອງໂຄງການ ..... 26

ມາດຕາ 56 ຂໍ້ຫ້າມ ສຳລັບ ຄະນະກຳມະການປະມູນ ..... 26

ມາດຕາ 57 ຂໍ້ຫ້າມ ສຳລັບ ທີ່ປຶກສາໂຄງການ ..... 27

ມາດຕາ 58 ຂໍ້ຫ້າມ ສຳລັບ ພາກເອກະຊົນ, ຜູ້ເຂົ້າຮ່ວມປະມູນ ແລະ ຜູ້ຊະນະປະມູນ ..... 27

**ໝວດທີ 12 ການກວດກາ ແລະ ການປະເມີນຜົນໂຄງການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ 28**

ມາດຕາ 59 ຄວາມຮັບຜິດຊອບລວມໃນການ ຕິດຕາມກວດກາ ແລະ ການປະເມີນຜົນໂຄງການ ..... 28

ມາດຕາ 60 ຄວາມຮັບຜິດຊອບຂອງ ຫ້ອງການການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ . 29

ມາດຕາ 61 ຄວາມຮັບຜິດຊອບຂອງ ເຈົ້າຂອງໂຄງການ ..... 29

ມາດຕາ 62 ຄວາມຮັບຜິດຊອບຂອງ ບໍລິສັດໂຄງການ ..... 30

ມາດຕາ 63 ການກວດກາພາຍນອກ ..... 30

**ໝວດທີ 13 ນະໂຍບາຍຕໍ່ຜູ້ມີຜົນງານແລະ ມາດຕະການຕໍ່ຜູ້ລະເມີດ ..... 30**

ມາດຕາ 64 ນະໂຍບາຍຕໍ່ຜູ້ມີຜົນງານ ..... 30

ມາດຕາ 65 ມາດຕະການຕໍ່ຜູ້ລະເມີດ ..... 31

**ໝວດທີ 14 ບົດບັນຍັດສຸດທ້າຍ....31**
ມາດຕາ 66 ການຈັດຕັ້ງປະຕິບັດ....31
ມາດຕາ 67 ຜົນສັກສິດ....31

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ /ລບ

ນະຄອນຫຼວງວຽງຈັນ, ວັນທີ

# (ຮ່າງ)
# ດຳລັດ
# ວ່າດ້ວຍການລົງທຶນຮ່ວມ ລະຫວ່າງ ພາກລັດແລະ ພາກເອກະຊົນ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 04/ສພຊ, ລົງວັນທີ 8 ພຶດສະພາ 2016;
- ອີງຕາມ ກົດໝາຍ ວ່າດ້ວຍການລົງທຶນຂອງລັດ (ສະບັບປັບປຸງ) ເລກທີ 72/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມ ກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ (ສະບັບປັບປຸງ ) ເລກທີ 14 /ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ກົດໝາຍ ວ່າດ້ວຍງົບປະມານແຫ່ງລັດ (ສະບັບປັບປຸງ) ເລກທີ 71/ສພຊ, ລົງວັນທີ 16 ທັນວາ 2016;
- ອີງຕາມ ໜັງສືສະເໜີຂອງ ກະຊວງ ແຜນການ ແລະ ການລົງທຶນ ສະບັບເລກທີ.............ລົງວັນທີ................

## ລັດຖະບານອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການສົ່ງເສີມ, ຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອຮັບປະກັນໃຫ້ ວຽກງານດັ່ງກ່າວ ມີປະສິດທິພາບ, ປະສິດທິຜົນ, ຍຸຕິທຳ, ໂປ່ງໃສ, ກວດສອບໄດ້ ແລະ ສອດຄ່ອງກັບແຜນ ພັດທະນາເສດຖະກິດ-ສັງຄົມ ຂອງຊາດ ໃນແຕ່ລະໄລຍະ ແນໃສ່ ສົ່ງເສີມການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ, ປົກປ້ອງສິດ ແລະ ຜົນປະໂຫຍດ ອັນຊອບທຳຂອງລັດ, ເອກະຊົນ ແລະ ປະຊາຊົນ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃຫ້ມີຄວາມເຂັ້ມແຂງ ແລະ ໝັ້ນຄົງຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຂຽນເປັນພາສາອັງກິດ Public Private Partnership: "PPP" ແມ່ນ ກິດຈະການຮ່ວມລົງທຶນ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ພາຍໃຕ້ ສັນຍາການລົງທຶນຮ່ວມ ໃນກຳນົດເວລາອັນແນ່ນອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມ ການລົງທຶນ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນດຳລັດສະບັບນີ້ມີຄວາມໝາຍດັ່ງນີ້:

1. **ການປະມູນ** ໝາຍເຖິງ ຂະບວນການຄັດເລືອກຄູ່ສັນຍາພາກເອກະຊົນ ທີ່ດຳເນີນຢ່າງມີຄວາມໂປ່ງໃສ ແລະ ຍຸຕິທຳ ໂດຍສອດຄ່ອງກັບ ດຳລັດສະບັບນີ້ ແລະ ກົດໝາຍທີ່ກ່ຽວຂ້ອງ;

2. **ຜູ້ເຂົ້າແຂ່ງຂັນປະມູນ** ໝາຍເຖິງ ນິຕິບຸກຄົນພາຍໃນ ແລະ ຕ່າງປະເທດ ທີ່ມີຄຸນວຸດທິທີ່ເໝາະສົມ ເພື່ອເຂົ້າຮ່ວມແຂ່ງຂັນ ການປະມູນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

3. **ຊຸດເອກະສານປະມູນ** ໝາຍເຖິງ ບັນດາເອກະສານທາງການ ທີ່ໃຊ້ເປັນບ່ອນອີງ ໃຫ້ແກ່ຜູ້ທີ່ສົນໃຈ ເຂົ້າຮ່ວມແຂ່ງຂັນການປະມູນ ໄດ້ສະແດງເຈດຈຳນົງຄວາມສົນໃຈໃນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍຍື່ນເອກະສານ ດ້ານເຕັກນິກ ແລະ ການເງິນ ຂອງໂຄງການ;

4. **ໜັງສືຄ້ຳປະກັນການປະມູນ** ໝາຍເຖິງ ເອກະສານຄ້ຳປະກັນດ້ານການເງິນ ທີ່ອອກໂດຍທະນາຄານ ທີ່ໄດ້ຮັບຄວາມເຊື່ອຖື ຊຶ່ງຜູ້ເຂົ້າຮ່ວມປະມູນ ໃຊ້ສຳລັບເປັນສິ່ງຄ້ຳປະກັນ ຂໍ້ສະເໜີຂອງຕົນ ຈົນເຖິງວັນທີ ທີ່ໄດ້ລົງນາມໃນສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຫຼື ຈົນໝົດອາຍຸຂອງການປະມູນ;

5. **ການຮ້ອງຮຽນ** ໝາຍເຖິງ ຂໍ້ສະເໜີຄັດຄ້ານທີ່ເປັນລາຍລັກອັກສອນ ຕໍ່ຫ້ອງການລົງທຶນ ຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ, ກະຊວງແຜນການ ແລະ ການລົງທຶນ ຂອງຜູ້ທີ່ມີຄວາມສົນໃຈ ຫຼື ຜູ້ເຂົ້າຮ່ວມແຂ່ງຂັນປະມູນ ໃນກໍລະນີທີ່ເຫັນວ່າມີການກະທຳຜິດ ຂອງຄະນະກຳມະການປະມູນ ແລະ/ຫຼື ຂອງເຈົ້າຂອງໂຄງການ ກ່ຽວກັບການປະມູນ;

6. **ພັນທະທີ່ອາດຈະເກີດຂຶ້ນໃນອະນາຄົດ**ໝາຍເຖິງ ພັນທະໃນການຊຳລະ ທີ່ອາດເກີດຂຶ້ນ ຈາກການຈັດຕັ້ງປະຕິບັດສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ຍັງມີຜົນສັກສິດ ແລະ/ຫຼື ຕາມກົດໝາຍຂອງ ສປປ ລາວ, ຊຶ່ງ ເວລາ ແລະ ມູນຄ່າ ທີ່ຕ້ອງຊຳລະດັ່ງກ່າວ ແມ່ນຂຶ້ນກັບເຫດການ ຫຼື ສະຖານະການ ທີ່ບໍ່ແນ່ນອນ ທີ່ອາດຈະເກີດຂຶ້ນໃນອະນາຄົດ, ການຈັດແບ່ງຄວາມສ່ຽງສະເພາະໃດໜຶ່ງ ໃນສັນຍາລົງທຶນ ອາດກໍ່ໃຫ້ເກີດມີພາລະຜູກພັນ ຕໍ່ ລັດຖະບານ ໃນອະນາຄົດ;

7. **ການເຈລະຈາໂດຍກົງ** ໝາຍເຖິງ ການເຈລະຈາທີ່ ເຈົ້າຂອງໂຄງການ ດຳເນີນການເຈລະຈາໂດຍກົງກັບຜູ້ທີ່ສົນໃຈຢາກພັດທະນາໂຄງການ ພາຍໃຕ້ສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເປັນກໍລະນີສະເພາະ ໂດຍບໍ່ຜ່ານຂະບວນການປະມູນດັ່ງທີ່ກຳນົດໄວ້ໃນດຳລັດສະບັບນີ້;

8. **ຜູ້ໃຫ້ທຶນ** ໝາຍເຖິງ ປະເທດ, ສະຖາບັນການເງິນພາຍໃນ ແລະ ຕ່າງປະເທດ ຫຼື ອົງການຈັດຕັ້ງສາກົນ ທີ່ສະໜອງເງິນກູ້/ສິນເຊື່ອ ແລະ/ຫຼື ໃຫ້ການຊ່ວຍເຫຼືອທາງດ້ານວິຊາການ ແລະ/ຫຼື ເງິນທຶນເພື່ອສົ່ງເສີມການພັດທະນາດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ;

9. **ຄະນະກຳມະການປະມູນ** ໝາຍເຖິງ ບັນດາບຸກຄົນທີ່ຖືກແຕ່ງຕັ້ງຢ່າງເປັນທາງການຈາກ ເຈົ້າຂອງໂຄງການ ເພື່ອຮັບຜິດຊອບການດຳເນີນການຈັດຊື້ຈັດຈ້າງ ແລະ ປະມູນ ເລີ່ມຈາກຂັ້ນຕອນການກະກຽມເອກະສານປະມູນ ຈົນຮອດ ຂັ້ນຕອນການເຊັນສັນຍາລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ;

10. **ບົດລາຍງານການປະເມີນ** ໝາຍເຖິງ ການປະເມີນເອກະສານປະມູນຢ່າງເປັນລາຍລັກອັກສອນຕາມເງື່ອນໄຂທີ່ກຳນົດໄວ້ໃນກອບເງື່ອນໄຂ (TOR) ເຊັ່ນ: ການຄັດເລືອກຄຸນວຸດທິເບື້ອງຕົ້ນ, ຂໍ້ສະເໜີທາງດ້ານເຕັກນິກ ແລະ ການເງິນ, ລາຍຊື່ຜູ້ທີ່ຖືກຄັດເລືອກໃຫ້ເຂົ້າຮ່ວມການປະມູນ ໂດຍ ແມ່ນຄະນະກຳມະການປະມູນເປັນຜູ້ປະເມີນ;

11. **ບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກຂອງໂຄງການ** ໝາຍເຖິງ ເອກະສານ ທີ່ກຳນົດຮູບແບບລັກສະນະຂອງໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ສະແດງໃຫ້ເຫັນ ຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ , ການເງິນ, ງົບປະມານ, ຄວາມສອດຄ່ອງທາງດ້ານກົດໝາຍ, ຜົນປະໂຫຍດທາງດ້ານເສດຖະກິດ-ສັງຄົມ , ລັກສະນະຂອງຄວາມສ່ຽງ , ຄວາມຍືນຍົງຂອງໂຄງການ, ບັນຫາດ້ານສິ່ງແວດລ້ອມ ແລະ ສັງຄົມ, ບັນຫາບົດບາດຍິງ-ຊາຍ, ນະໂຍບາຍສະໜັບສະໜູນຂອງລັດຖະບານຕໍ່ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ (ຖ້າຫາກມີຄວາມຈຳເປັນ);

12. **ລັດຖະບານ** ໝາຍເຖິງ ກະຊວງ, ອົງການ, ແຂວງ, ນະຄອນ ແຫ່ງ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ;

13. **ພາກເອກະຊົນ** ໝາຍເຖິງ ນິຕິບຸກຄົນພາຍໃນ ແລະ ຕ່າງປະເທດ ທີ່ມີຄຸນວຸດທິເໝາະສົມເຂົ້າຮ່ວມການປະມູນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອເປັນຄູ່ຮ່ວມໃນໂຄງການລົງທຶນ;

14. **ການສະໜັບສະໜູນຂອງລັດຖະບານ**ໝາຍເຖິງ ການສະໜັບສະໜູນທາງດ້ານນິຕິກຳ, ດ້ານການເງິນ ແລະ ດ້ານນະໂຍບາຍຕ່າງໆ ຕາມດຳລັດສະບັບນີ້;

15. **ການຖືມຮຸມ** ໝາຍເຖິງ ການຊ່ວຍເຫຼືອ ທາງກົງ ຫຼື ທາງອ້ອມ ຂອງລັດຖະບານ ຕໍ່ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ລັດຖະບານຕ້ອງການສົ່ງເສີມ ເພື່ອໃຫ້ມີປະສິດທິຜົນທາງດ້ານເສດຖະກິດ ແລະ ເພື່ອຮັບໃຊ້ສັງຄົມ;

16. **ບົດສະເໜີໂຄງການເບື້ອງຕົ້ນ** ໝາຍເຖິງ ບົດສະເໜີໂຄງການໂດຍຫຍໍ້ ທີ່ສ້າງຂຶ້ນໂດຍ ສອດຄ່ອງກັບດຳລັດສະບັບນີ້;

17. **ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ** ໝາຍເຖິງ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ທີ່ຖືກສ້າງຕັ້ງຂຶ້ນຕາມການກຳນົດຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ;

18. **ການແຈ້ງຜູ້ຊະນະການປະມູນ** ໝາຍເຖິງ ການອອກແຈ້ງການ ໂດຍຫ້ອງການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ເອກະຊົນ ໃຫ້ຜູ້ທີ່ຖືກຄັດເລືອກ ໃຫ້ເປັນຜູ້ຊະນະການປະມູນ;

19. **ການຊ່ວຍເຫຼືອທາງການເພື່ອການພັດທະນາ**ໝາຍເຖິງ ການຊ່ວຍເຫຼືອທາງດ້ານວິຊາການ , ທຶນກູ້ຢືມເງື່ອນໄຂຜ່ອນຜັນ, ທຶນຊ່ວຍເຫຼືອລ້າ, ການຊ່ວຍເຫຼືອເປັນວັດຖຸ, ການຊ່ວຍເຫຼືອ ດ້ານມະນຸດສະທຳ ແລະ ການຊ່ວຍເຫຼືອສຸກເສີນຕ່າງໆ ທີ່ລັດຖະບານໄດ້ຮັບຈາກຜູ້ໃຫ້ການຊ່ວຍເຫຼືອຕ່າງປະເທດ ເພື່ອໃຊ້ໃນການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ;

20. **ບໍລິສັດໂຄງການ** ໝາຍເຖິງ ບໍລິສັດທີ່ຜູ້ຊະນະການປະມູນສ້າງຕັ້ງຂຶ້ນພາຍໃຕ້ກົດໝາຍ ສປປ ລາວ ໃນຮູບແບບ ບໍລິສັດຈຳກັດຜູ້ດຽວ , ບໍລິສັດຈຳກັດ ຫຼື ບໍລິສັດມະຫາຊົນ ຫຼື ກຸ່ມບໍລິສັດ ຕາມກົດໝາຍ ສປປ ລາວ ເພື່ອຈັດຕັ້ງປະຕິບັດໂຄງການ ພາຍໃຕ້ສັນຍາລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

21. **ເຈົ້າຂອງໂຄງການ** ໝາຍເຖິງ ກະຊວງ, ອົງການລັດທຽບເທົ່າກະຊວງ , ນະຄອນຫຼວງ ແລະ ແຂວງ ທີ່ຮັບການມອບໝາຍໃຫ້ຮັບຜິດຊອບ ການກະກຽມ , ການປະມູນ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມ ກວດກາ ໂຄງການ ແລະ ສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

22. **ທຶນສໍາລັບການກະກຽມໂຄງການ**ໝາຍເຖິງ ທຶນທີ່ຖືກຈັດສັນໄວ້ເພື່ອນໍາໃຊ້ເຂົ້າໃນການກະ ກຽມ ໂຄງການ ເລີ່ມແຕ່ຂັ້ນຕອນສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຂອງໂຄງການ ຈົນເຖິງ ຂັ້ນ ຕອນ ສໍາເລັດການປະມູນໂຄງການ ແລະ ຕິດຕາມ ກວດກາໂຄງການ;

23. **ສັນຍາລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ** ໝາຍເຖິງ ສັນຍາຜູກພັນ ລະຫວ່າງ ລັດຖະບານ, ຕາງໜ້າ ໂດຍຂະແໜງແຜນການ ແລະ ການລົງທຶນ ແລະ ບໍລິສັດ ໂຄງການ ໃນການພັດທະນາ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

24. **ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ** ໝາຍເຖິງ ໂຄງການ ພັດທະນາ ແລະ/ຫຼື ການຄຸ້ມຄອງບໍລິຫານໂຄງການພື້ນຖານໂຄງລ່າງ ແລະ ການບໍລິການ ໃຫ້ແກ່ສັງຄົມໃນກໍານົດເວລາ ອັນແນ່ນອນ, ເປັນໂຄງການທີ່ນອນໃນແຜນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ ຖືກຮັບຮອງໂດຍ ລັດຖະບານ, ຜ່ານຂັ້ນຕອນການປະມູນທີ່ໂປ່ງໃສ ແລະ ເປີດກວ້າງ;

25. **ແນວຄວາມຄິດລິເລີ່ມ (Unsolicited) ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກ ເອກະຊົນ** ໝາຍເຖິງ ໂຄງການທີ່ບໍ່ໄດ້ ຖືກບັນຈຸເຂົ້າໃນແຜນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເທື່ອ , ແຕ່ເປັນການສະເໜີ ຂອງພາກເອກະຊົນ ຫຼື ເຈົ້າຂອງໂຄງການ ເພື່ອ ຂໍການພິຈາລະນາ ຈາກລັດຖະບານ ຫຼື ສະພາແຫ່ງຊາດ ໃນການ ພັດທະນາ ເປັນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

26. **ບົດສະເໜີ ແນວຄວາມຄິດລິເລີ່ມ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ** ໝາຍເຖິງ ບົດສະເໜີໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພ າກເອກະຊົນ ທີ່ສ້າງຂຶ້ນດ້ວຍຄ່າໃຊ້ ຈ່າຍ ແລະ ຄວາມສ່ຽງຂອງພາກເອກະຊົນ ເພື່ອ ຂໍພັດທະນາ ເປັນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍສອດຄ່ອງກັບດໍາລັດສະບັບນີ້;

27. **ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**ໝາຍເຖິງ ໜ່ວຍງານທີ່ຖືກສ້າງຕັ້ງ ຂຶ້ນ ໂດຍລັດຖະບານ ຊຶ່ງມີທີ່ຕັ້ງຢູ່ ຂະແໜງແຜນການ ແລະ ການລົງທຶນ ທີ່ມີພາລະບົດບາດຕາມທີ່ລະບຸໃນດໍາ ລັດສະບັບນີ້;

28. **ລັດວິສາຫະກິດ** ໝາຍເຖິງ ຫົວໜ່ວຍທຸລະກິດທີ່ຖືກສ້າງຕັ້ງຂຶ້ນ ແລະ ບໍລິຫານໂດຍລັດ ຫຼື ລັດ ຮ່ວມທຶນ ກັບ ຫົວໜ່ວຍວິສາຫະກິດອື່ນ ຊຶ່ງລັດຖະບານ ຖືຮຸ້ນຢ່າງໜ້ອຍ ຫ້າສິບເອັດ ສ່ວນຮ້ອຍ (51%) ຂອງຮຸ້ນທັງໝົດ;

29. **ຄວາມຄຸ້ມຄ່າຂອງການລົງທຶນ**ໝາຍເຖິງ ປະສິດພາບ ແລະ ປະສິດທິຜົນ ຂອງການລົງທຶນ ເຂົ້າໃນ ໂຄງການ;

30. **ທຶນຮັບປະກັນປະສິດທິພາບທາງດ້ານເສດຖະກິດຂອງໂຄງການ**ໝາຍເຖິງ ການສະໜັບສະໜູນ ດ້ານການເງິນຂອງລັດຖະບານ ເພື່ອໃຫ້ໂຄງການສາມາດດໍາເນີນໄປໄດ້ຢ່າງມີປະສິດທິຜົນທາງດ້ານເສດຖະກິດ ;

31. **ແຜນງົບປະມານຊໍາລະໂຄງການ**ໝາຍເຖິງ ແຜນລາຍຈ່າຍທີ່ກໍານົດໄວ້ໃນແຜນງົບປະມານ ແລະ ໃນສັນຍາລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອຊໍາລະໃຫ້ແກ່ ໂຄງການຕາມທີ່ໄດ້ເຊັນ ສັນຍາແລ້ວ ເປັນແຕ່ລະປີ ຈົນຄົບຖ້ວນຕາມກໍານົດເວລາຂອງສັນຍາ ໃນກໍລະນີຕ້ອງມີການສະໜັບສະໜູນ ຂອງລັດຖະບານ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບ ວຽກງານລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ລັດ ຊຸກຍູ້, ສົ່ງເສີມພາກເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ຮ່ວມລົງທຶນກັບພາກລັດ ດ້ວຍການວາງນະໂຍບາຍ, ສ້າງສະພາບແວດລ້ອມ ແລະ ເງື່ອນໄຂອຳນວຍຄວາມສະດວກ, ສະໜອງຂໍ້ມູນຂ່າວສານ ແລະ ການບໍລິການ ເພື່ອໃຫ້ສາມາດລົງທຶນຮ່ວມກັນ ໃນໂຄງການກໍ່ສ້າງໃໝ່, ປັບປຸງໂຄງລ່າງພື້ນຖານ ຫຼື ສະໜອງການບໍລິການສາທາລະນະໃນຂະແໜງການ, ເງື່ອນໄຂ ແລະ ຂັ້ນຕອນ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

**ມາດຕາ 5 ຫຼັກການກ່ຽວກັບວຽກງານລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ວຽກງານລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ກົດໝາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ຮັບປະກັນການຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໂດຍມີການແບ່ງຄວາມຮັບຜິດຊອບໃຫ້ຂະແໜງການກ່ຽວຂ້ອງຢ່າງຈະແຈ້ງ;
3. ເປີດເຜີຍຂໍ້ມູນກ່ຽວກັບ ການແຂ່ງຂັນ, ການປະມູນ, ມູນຄ່າ, ຜົນປະໂຫຍດ ແລະ ຄວາມສ່ຽງໃນການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ ລວມທັງລະບຽບການ ທີ່ມີຜົນກະທົບໂດຍກົງຕໍ່ການລົງທຶນດັ່ງກ່າວ;
4. ຮັບປະກັນຜົນປະໂຫຍດສູງສຸດ ທາງດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ບົນພື້ນຖານການສຶກສາຜົນກະທົບ, ຄວາມເປັນໄປໄດ້ ແລະ ຄວາມຄຸ້ມຄ່າຂອງການລົງທຶນ;
5. ຈັດແບ່ງຄວາມຮັບຜິດຊອບໃນການລົງທຶນຮ່ວມ ລະຫວ່າງ ເຈົ້າຂອງໂຄງການ ແລະ ບໍລິສັດໂຄງການໃຫ້ມີຄວາມເໝາະສົມ ລວມທັງຄວາມຮັບຜິດຊອບຕໍ່ ການຄຸ້ມຄອງ ແລະ ບໍລິຫານຄວາມສ່ຽງທີ່ອາດເກີດຂຶ້ນ;
6. ຮັບປະກັນການຄຸ້ມຄອງ, ບໍລິຫານການລົງທຶນຮ່ວມດ້ວຍຄວາມສະເໝີພາບ, ຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້;
7. ສົ່ງເສີມການມີສ່ວນຮ່ວມຂອງບຸກຄົນທີ່ເປັນພົນລະເມືອງລາວ, ນິຕິບຸກຄົນ ແລະ ການຈັດຕັ້ງພາຍໃນປະເທດ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;
8. ຮັບປະກັນຄວາມໝັ້ນຄົງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

**ມາດຕາ 6 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງພາກລັດ ແລະ ພາກເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ ຢູ່ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດສົ່ງເສີມການພົວພັນການຮ່ວມມືກັບຕ່າງປະເທດໃນຮູບແບບສອງຝ່າຍ ແລະ ຫຼາຍຝ່າຍ ໃນລະດັບພາກພື້ນ ແລະ ສາກົນ ກ່ຽວກັບວຽກງານລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນໂລຊີ ແລະ ປະສົບປະການດ້ານການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ໃນຮູບການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ, ສົນທິສັນຍາ ແລະ ສັນຍາ ສາກົນ ທີ່ ສປປ ລາວ ເປັນພາຄີ.

## ໝວດທີ 2
## ຮູບການ, ຮູບແບບ, ລັກສະນະ ແລະ ການກຳນົດເອົາ ຮູບແບບ ແລະ ອາຍຸສັນຍາ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ

**ມາດຕາ 8 ຮູບການ ການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ມີ ສອງ ຮູບການ ດັ່ງນີ້:

1. ລັດປະກອບທຶນສົມທົບເຂົ້າໂດຍກົງໃນການພັດທະນາໂຄງການຮ່ວມກັບພາກເອກະຊົນ;
2. ລັດບໍ່ປະກອບທຶນສົມທົບເຂົ້າໂດຍກົງແຕ່ໃຫ້ການສະໜັບສະໜູນ ຕາມມາດຕາ 50, 51 ແລະ 52 ຂອງດຳລັດສະບັບນີ້.

**ມາດຕາ 9 ຮູບການລັດປະກອບທຶນສົມທົບເຂົ້າໂດຍກົງໃນການພັດທະນາໂຄງການ**

ການປະກອບທຶນສົມທົບຂອງລັດເຂົ້າໂດຍກົງໃນການພັດທະນາໂຄງການຮ່ວມກັບພາກເອກະຊົນ ແມ່ນອີງຕາມຜົນຂອງການສຶກສາຄວາມເປັນໄປໄດ້ ທາງດ້ານເສດຖະກິດ-ເຕັກນິກ ບົນພື້ນຖານການເຫັນດີ ຂອງລັດຖະບານ ແລະ ຮັບຮອງໂດຍສະພາແຫ່ງຊາດ.

ຂັ້ນຕອນການພິຈາລະນາ ຕ້ອງສອດຄ່ອງກັບດຳລັດສະບັບນີ້, ກົດໝາຍວ່າດ້ວຍການລົງທຶນຂອງລັດ, ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 10 ຮູບການລັດບໍ່ປະກອບທຶນສົມທົບເຂົ້າໂດຍກົງ**

ພາກເອກະຊົນ ເປັນຜູ້ຮັບຜິດຊອບທັງໝົດແຫຼ່ງທຶນພັດທະນາໂຄງການໂດຍທີ່ລັດບໍ່ປະກອບທຶນສົມທົບເຂົ້າໃນການພັດທະນາໂຄງການ, ແຕ່ລັດອາດໃຫ້ການສະໜັບສະໜູນດ້ານນະໂຍບາຍສິ່ງເສີມອື່ນ ໂດຍອີງຕາມຜົນຂອງການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຂອງໂຄງການ.

**ມາດຕາ 11 ຮູບແບບລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ຮູບແບບ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ມີ ດັ່ງນີ້:

1. ອອກແບບ, ກໍ່ສ້າງ, ສະໜອງທຶນ ແລະ ດຳເນີນງານ (DBFO);
2. ອອກແບບ, ກໍ່ສ້າງ ແລະ ດຳເນີນງານ (DBO);
3. ກໍ່ສ້າງ, ດຳເນີນງານ ແລະ ມອບໂອນ (BOT);
4. ກໍ່ສ້າງ, ເປັນເຈົ້າຂອງ, ດຳເນີນງານ ແລະ ໂອນ (BOOT);
5. ກໍ່ສ້າງ, ເປັນເຈົ້າຂອງ ແລະ ດຳເນີນງານ (BOO);
6. ກໍ່ສ້າງ, ມອບໂອນ ແລະ ດຳເນີນງານ (BTO);
7. ກໍ່ສ້າງ, ເຊົ່າ ແລະ ມອບໂອນ (BLT);
8. ກໍ່ສ້າງ ແລະ ມອບໂອນ (BT).

## ມາດຕາ 12 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ອອກແບບ, ກໍ່ສ້າງ, ສະໜອງທຶນ ແລະ ດໍາເນີນງານ (DBFO)

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ອອກແບບ, ກໍ່ສ້າງ, ສະໜອງທຶນ ແລະ ດໍາເນີນງານ ( DBFO) ແມ່ນພາກເອກະຊົນ ເປັນຜູ້ຮັບຜິດຊອບໃນການອອກແບບ, ການກໍ່ສ້າງ, ການຈັດຫາເງິນທຶນ, ດໍາເນີນງານ ແລະ ບໍາລຸງຮັກສາໂຄງການດ້ວຍຕົນເອງ ໂດຍມີສັນຍາ ໃນໄລຍະເວລາອັນແນ່ນອນໃດໜຶ່ງ. ຫຼັງຈາກສິ້ນສຸດສັນຍາແລ້ວ ພາກເອກະຊົນ ຕ້ອງໂອນໂຄງການສໍາປະທານດັ່ງກ່າວ ຢູ່ໃນສະພາບດີ ໃຫ້ລັດຖະບານ ໂດຍບໍ່ຄິດໄລ່ມູນຄ່າຄືນ.

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ອອກແບບ, ກໍ່ສ້າງ, ສະໜອງທຶນ ແລະ ດໍາເນີນງານ ( DBFO) ໃຊ້ໃນການພັດທະນາພື້ນຖານໂຄງລ່າງ ແລະ ການບໍລິການ ທີ່ມີຂະໜາດການລົງທຶນໃຫຍ່ ເຊັ່ນ: ຖະໜົນ, ສະໜາມບິນ, ທາງລົດໄຟ, ພະລັງງານ, ອາຍແກສ - ນໍ້າມັນ, ບໍ່ແຮ່, ແຫຼ່ງທ່ອງທ່ຽວເຂດເສດຖະກິດພິເສດ ແລະ ໂຄງການອື່ນໆ.

## ມາດຕາ 13 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ອອກແບບ, ກໍ່ສ້າງ ແລະ ດໍາເນີນງານ (DBO)

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ອອກແບບ, ກໍ່ສ້າງ ແລະ ດໍາເນີນງານ (DBO) ໂດຍພາກລັດເປັນເຈົ້າຂອງໂຄງການ ແລະ ເປັນຜູ້ຮັບຜິດຊອບໃນການສະໜອງທຶນໃຫ້ແກ່ພາກເອກະຊົນໃນການອອກແບບ ແລະ ການກໍ່ສ້າງ, ພາຍຫຼັງສໍາເລັດການກໍ່ສ້າງ ລັດວ່າຈ້າງເອກະຊົນຄຸ້ມຄອງບໍລິຫານ ແລະ ບໍາລຸງຮັກສາໂຄງການ ໂດຍການເຮັດສັນຍາຮ່ວມກັນໃນໄລຍະເວລາອັນແນ່ນອນໃດໜຶ່ງ. ຫຼັງຈາກສິ້ນສຸດສັນຍາແລ້ວ ພາກເອກະຊົນ ຕ້ອງມອບໂຄງການດັ່ງກ່າວຢູ່ໃນສະພາບດີຄືນ ໃຫ້ລັດຖະບານ ໂດຍບໍ່ຄິດໄລ່ມູນຄ່າຄືນ.

ການຊໍາລະສະສາງ ແມ່ນອີງໃສ່ຜົນຂອງການຈັດຕັ້ງປະຕິບັດໂຄງການຕົວຈິງຕາມມາດຕະຖານ ແລະເງື່ອນໄຂທີ່ໄດ້ກໍານົດໄວ້ໃນສັນຍາ.

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບອອກແບບ, ກໍ່ສ້າງ ແລະ ດໍາເນີນງານ (DBO) ໃຊ້ໃນໂຄງການພັດທະນາໂຄງລ່າງພື້ນຖານ ແລະ ການບໍລິການຂະໜາດກາງ.

## ມາດຕາ 14 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ດໍາເນີນງານ ແລະ ມອບໂອນ (BOT)

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ດໍາເນີນງານ ແລະມອບໂອນ ( BOT) ແມ່ນພາກລັດໃຫ້ສິດສໍາປະທານໂຄງການ ໃຫ້ແກ່ພາກເອກະຊົນ ໃນໄລຍະເວລາອັນແນ່ນອນໃດໜຶ່ງ ໂດຍພາກເອກະຊົນ ເປັນຜູ້ຮັບຜິດຊອບສະໜອງທຶນໃນການກໍ່ສ້າງ ແລະ ດໍາເນີນໂຄງການ. ຫຼັງຈາກສິ້ນສຸດສັນຍາແລ້ວ ພາກເອກະຊົນ ຕ້ອງໂອນໂຄງການສໍາປະທານດັ່ງກ່າວ ຢູ່ໃນສະພາບດີໃຫ້ລັດຖະບານໂດຍບໍ່ຄິດໄລ່ມູນຄ່າຄືນ.

ການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ດໍາເນີນງານ ແລະ ມອບໂອນ ( BOT) ໃຊ້ໃນການລົງທຶນພັດທະນາໂຄງການພື້ນຖານໂຄງລ່າງ ແລະ ການບໍລິການ ສໍາລັບໂຄງການລົງທຶນຂະໜາດກາງ ແລະ ຂະໜາດໃຫຍ່.

**ມາດຕາ 15 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ເປັນເຈົ້າຂອງ, ດໍາເນີນງານ ແລະ ມອບໂອນ(BOOT)**

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ດໍາເນີນງານ, ເປັນເຈົ້າຂອງ ແລະ ມອບໂອນ ( BOOT) ໂດຍພາກລັດໃຫ້ສິດສໍາປະທານໂຄງການ ໃຫ້ແກ່ພາກເອກະຊົນ ໃນໄລຍະເວລາອັນແນ່ນອນໃດໜຶ່ງ. ໂດຍພາກເອກະຊົນ ເປັນຜູ້ຮັບຜິດຊອບສະໜອງທຶນໃນການກໍ່ສ້າງ, ຫຼັງຈາກນັ້ນເປັນເຈົ້າຂອງ ແລະ ດໍາເນີນໂຄງການ, ຫຼັງຈາກສິ້ນສຸດສັນຍາແລ້ວ ພາກເອກະຊົນ ຕ້ອງໂອນໂຄງການສໍາປະທານ ດັ່ງກ່າວຢູ່ໃນສະພາບດີໃຫ້ລັດຖະບານ ໂດຍບໍ່ຄິດໄລ່ມູນຄ່າຄືນ.

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ດໍາເນີນງານ, ເປັນເຈົ້າຂອງ ແລະ ມອບໂອນ ( BOOT) ໃຊ້ໃນການພັດທະນາໂຄງການໂຄງລ່າງພື້ນຖານ ແລະ ການບໍລິການ ຂະໜາດນ້ອຍ ແລະ ຂະໜາດກາງ.

**ມາດຕາ 16 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ເປັນເຈົ້າຂອງ ແລະ ດໍາເນີນງານ (BOO)**

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ເປັນເຈົ້າຂອງ ແລະ ດໍາເນີນງານ (BOO) ເປັນການລົງທຶນຂອງພາກເອກະຊົນເອງ ຊຶ່ງຜູ້ລົງທຶນດໍາເນີນໂຄງການ ຢ່າງເປັນເອກະລາດ ແຕ່ລັດຖະບານໃຫ້ນະໂຍບາຍດ້ານ ພາສີ-ອາກອນ ແລະ ການສະໜັບສະໜູນດ້ານຕ່າງໆ ຕາມກົດໝາຍ ແລະ ລະບຽບການ.

ການລົງທຶນໃນຮູບແບບ ກໍ່ສ້າງ, ເປັນເຈົ້າຂອງ ແລະ ດໍາເນີນງານ (BOO) ນໍາໃຊ້ໃນຂະແໜງກໍ່ສ້າງໂຄງລ່າງພື້ນຖານ, ຂະແໜງບໍລິການ ແລະ ໂຄງການລົງທຶນ ຂະໜາດກາງ ແລະ ຂະໜາດໃຫຍ່.

**ມາດຕາ 17 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ມອບໂອນ ແລະ ດໍາເນີນງານ (BTO)**

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ມອບໂອນ ແລະ ດໍາເນີນງານ ( BTO) ແມ່ນພາກເອກະຊົນ ເປັນຜູ້ອອກແບບ ແລະ ກໍ່ສ້າງ ດ້ວຍທຶນຂອງຕົນເອງ ແລະ ຫຼັງຈາກສິ້ນສຸດການກໍ່ສ້າງ ພາກເອກະຊົນຕ້ອງມອບໂຄງການໃຫ້ພາກລັດ. ຫຼັງຈາກນັ້ນ ພາກລັດຈຶ່ງໃຫ້ພາກເອກະຊົນເຊົ່າໂຄງລ່າງ ຫຼື ກິດຈະການ ດັ່ງກ່າວ ດ້ວຍການເຮັດສັນຍາເຊົ່າຮ່ວມກັນ ໃນໄລຍະເວລາອັນແນ່ນອນໃດໜຶ່ງ.

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ມອບໂອນ ແລະ ດໍາເນີນງານ (BTO) ໃຊ້ໃນການກໍ່ສ້າງພື້ນຖານໂຄງລ່າງ ແລະ ການບໍລິການ ໃນທຸກຂະໜາດ.

**ມາດຕາ 18 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ເຊົ່າ ແລະ ມອບໂອນ (BLT)**

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ເຊົ່າ ແລະ ມອບໂອນ (BLT) ແມ່ນ ພາກເອກະຊົນເປັນຜູ້ອອກແບບ ແລະ ກໍ່ສ້າງ ດ້ວຍທຶນຂອງຕົນເອງ, ຫຼັງຈາກສິ້ນສຸດການກໍ່ສ້າງ ພາກເອກະຊົນ ເຮັດສັນຍາເຊົ່າໂຄງລ່າງ ຫຼື ກິດຈະການກັບພາກລັດ ໃນໄລຍະເວລາອັນແນ່ນອນໃດໜຶ່ງ. ຫຼັງຈາກສິ້ນສຸດສັນຍາເຊົ່າ ພາກເອກະຊົນ ຕ້ອງສົ່ງໂຄງການ ຫຼື ກິດຈະການຄືນໃຫ້ພາກລັດ (ຫຼື ຊໍາລະສະສາງດ້ວຍຄວາມຮັບຜິດຊອບຂອງພາກເອກະຊົນເອງ).

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ເຊົ່າ ແລະ ມອບໂອນ (BLT) ໃຊ້ໃນການກໍ່ສ້າງໂຄງລ່າງພື້ນຖານ ແລະ ການບໍລິການ ໃນທຸກຂະໜາດ.

**ມາດຕາ 19 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ ແລະ ມອບໂອນ(BT)**

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ ແລະ ມອບໂອນ (BT) ແມ່ນ ພາກລັດເປັນຜູ້ສະໜອງທຶນ ໃນການອອກແບບ ແລະ ກໍ່ສ້າງ, ໂດຍການວ່າຈ້າງໃຫ້ພາກເອກະຊົນ ເປັນຜູ້ອອກແບບ ແລະ ກໍ່ສ້າງ, ເມື່ອກໍ່ສ້າງສຳເລັດມອບໂອນໃຫ້ພາກລັດເປັນເຈົ້າຂອງໂຄງການ ແລະ ນຳໃຊ້ ຫຼື ດຳເນີນງານເລີຍ, ພາກລັດຕ້ອງໄດ້ຊຳລະຄືນໃຫ້ຜູ້ຮັບເໝົາການກໍ່ສ້າງຕາມທີ່ໄດ້ກຳນົດໄວ້ໃນສັນຍາ.

**ມາດຕາ 20 ລັກສະນະ ຂອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ ມີລັກສະນະສະເພາະ ດັ່ງນີ້:

ສັນຍາ ລະຫວ່າງ ລັດຖະບານ ກັບ ບໍລິສັດໂຄງການ;

1. ປະຕິບັດລະບຽບທາງການເງິນຢ່າງເຂັ້ມງວດ;
2. ການກໍ່ສ້າງໃໝ່, ປັບປຸງໂຄງລ່າງພື້ນຖານ ຫຼື ສະໜອງການບໍລິການສາທາລະນະ ພາຍໃຕ້ຄວາມຮັບຜິດຊອບ ຂອງ ເຈົ້າຂອງໂຄງການ ແລະ ບໍລິສັດໂຄງການ ບົນພື້ນຖານເນັ້ນໃສ່ຜົນໄດ້ຮັບ;
3. ຄວາມຮັບຜິດຊອບຕໍ່ຄວາມສ່ຽງຂອງບໍລິສັດໂຄງການ ເປັນຕົ້ນ ຄວາມສ່ຽງທາງດ້ານການກໍ່ສ້າງ , ຄວາມຕ້ອງການຂອງຕະຫຼາດ, ລາຍຮັບ ແລະ ພັນທະຂອງບໍລິສັດໂຄງການໃນການຮັບປະກັນປະສິດທິພາບ ແລະ ປະສິດທິຜົນ ຂອງການລົງທຶນ;
4. ຮັບປະກັນສິດຜົນປະໂຫຍດຂອງຜູ້ຊົມໃຊ້ບໍລິການ ແລະ ຜູ້ໃຫ້ບໍລິການ;
5. ການລົງທຶນ ຂອງພາກເອກະຊົນ ທັງໝົດ ຫຼື ບາງສ່ວນ ໂດຍຜ່ານຂັ້ນຕອນການແຂ່ງຂັນ ແລະ ປະມູນ ແບບເປີດກວ້າງ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
6. ການສະໜັບສະໜູນທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ບົນພື້ນຖານການຕົກລົງຂອງລັດຖະບານ.

**ມາດຕາ 21 ການກຳນົດເອົາ ຮູບແບບ ແລະ ອາຍຸສັນຍາ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ການກຳນົດເອົາ ຮູບແບບ ທີ່ລະບຸໄວ້ໃນມາດຕາ 11 ຫາ ມາດຕາ 19 ຂອງດຳລັດສະບັບນີ້ ແລະ ອາຍຸສັນຍາຂອງໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແມ່ນອີງຕາມ ປະເພດ, ຂະໜາດ, ມູນຄ່າການລົງທຶນ, ເງື່ອນໄຂ, ລັກສະນະ ຈຸດພິເສດສະເພາະ, ຜົນການສຶກສາ ຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຂອງໂຄງການ. ສຳລັບ ອາຍຸສັນຍາ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແມ່ນສູງສຸດບໍ່ໃຫ້ເກີນ ຫ້າສິບ ປີ ຫຼື ອີງຕາມກົດໝາຍ ແລະ ລະບຽບການ ຂອງຂະແໜງການກ່ຽວຂ້ອງ.

## ໝວດທີ 3
## ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ແລະ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ

**ມາດຕາ 22 ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແມ່ນຄະນະດຽວກັນກັບ ຄ ະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ທີ່ຖືກສ້າງຕັ້ງຂຶ້ນພາຍໃຕ້ກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ ລົງວັນທີ 17 ພະຈິກ 2016.

**ມາດຕາ 23 ສິດ ແລະ ໜ້າທີ່ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳໂດຍລວມວຽກງານການສົ່ງເສີມ ແລະ ຄຸ້ມຄອງ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຢູ່ ສປປ ລາວ;
2. ພິຈາລະນາ ແຜນຍຸດທະສາດ, ແຜນງານ, ແຜນໂຄງການ ແລະ ແຜນງົບປະມານ ການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໄດ້ຄົ້ນຄວ້າ ແລະ ສັງລວມ ຕາມການສະເໜີຂອງຂະແໜງການກ່ຽວຂ້ອງ;
3. ພິຈາລະນາ ແລະ ຮັບຮອງ ຂອບໜ້າວຽກ ສຳລັບການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ, ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ , ສັງຄົມ ແລະ ທຳມະຊາດ ຂອງໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕາມທີ່ກຳນົດຢູ່ ຂໍ້ 2 ຂອງ ມາດຕານີ້;
4. ພິຈາລະນາ ຕົກລົງເຫັນດີ ຫຼື ປະຕິເສດ ການພັດທະນາໃນຮູບແບບ ລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍອີງໃສ່ຜົນຂອງການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ, ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ ຂອງໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ. ກໍລະນີມີການຕົກລົງເຫັນດີ ແມ່ນນຳສະເໜີ ລັດຖະບານພິຈາລະນາຮັບຮອງ;
5. ຄົ້ນຄວ້າພິຈາລະນາ ແລະ ມີຄຳເຫັນຕໍ່ການສະເໜີຂໍລົງທຶນໃນໂຄງການ ແນວຄວາມຄິດລິເລີ່ມໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອນຳສະເໜີຂໍການພິຈາລະນາ ແລະ ຕົກລົງຈາກລັດຖະບານ ຫຼື ສະພາແຫ່ງຊາດ;
6. ພິຈາລະນາ ແລະ ຮັບຮອງ ສັນຍາວ່າດ້ວຍການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ, ຮັບຮອງບັນດາລະບຽບການ , ບົດແນະນຳ ແລະ ເອກະສານມາດຕະຖານຕ່າງໆ ທີ່ພົວພັນກັບການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;
7. ພິຈາລະນາ ແລະ ຮັບຮອງເອົາຊ່ຽວຊານ ແລະ ທີ່ປຶກສາ ຕາມການສະເໜີ ຂອງຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍສອດຄ່ອງ ຕາມກົດໝາຍ ແລະ ລະບຽບການ;
8. ພິຈາລະນາບັນຫາອື່ນໆ ທີ່ພົວພັນກັບວຽກງານການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນໄລຍະກ່ອນການປະມູນ, ໄລຍະການປະມູນ ແລະ ໄລຍະການເຊັນສັນຍາ;
9. ຕິດຕາມກວດກາ, ປະເມີນການຈັດຕັ້ງປະຕິບັດດຳລັດສະບັບນີ້ ລວມທັງການຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ.

**ມາດຕາ 24 ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແມ່ນກົງຈັກທີ່ຂຶ້ນກັບກົມສົ່ງເສີມການລົງທຶນ ກະຊວງແຜນການ ແລະ ການລົງທຶນ.

ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ມີພາລະບົດບາດເປັນກອງເລຂາ ເຮັດໜ້າທີ່ເປັນເສນາທິການໃຫ້ແກ່ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ.

ກະຊວງ ແຜນການ ແລະ ການລົງທຶນ ເປັນຜູ້ກຳນົດພາລະບົດບາດ ແລະ ອອກລະບຽບການສະເພາະ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດວຽກງານ ຂອງຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ສິດ ແລະ ໜ້າທີ່ ຂອງຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ມີດັ່ງນີ້:

1. ເປັນໃຈກາງປະສານງານກັບຂະແໜງການທີ່ກ່ຽວຂ້ອງ ໃນວຽກງານການລົງທຶນຮ່ວມ ລະ ຫວ່າງ ພາກລັດ ແລະ ພາກເອກະຊົນ;

2. ປະສານງານກັບຂະແໜງການກ່ຽວຂ້ອງໃນການຄັດເລືອກໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເບື້ອງຕົ້ນ ເພື່ອເອົາເຂົ້າໃນແຜນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍອີງໃສ່ລະບຽບການ ແລະ ຂັ້ນຕອນ ກ່ຽວກັບການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອນຳສະເໜີຂໍການອະນຸມັດ ຈາກຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ໃນເດືອນ 3 ຂອງທຸກໆປີ;

3. ນຳສະເໜີ ບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກຂອງໂຄງການ ແລະ ຄຳເຫັນຄົ້ນຄວ້າດ້ານວິຊາການຂອງຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃຫ້ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາ;

4. ສ້າງລະບຽບການ ສຳລັບການຄັດເລືອກໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

5. ປະກອບຄຳເຫັນຕໍ່ການປະມູນ ແລະ ສັນຍາລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

6. ສະເໜີລັດຖະບານ ພິຈາລະນາອະນຸມັດ ແລະ ມອບສິດໃນການເຊັນສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍຜ່ານ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ;

7. ຮ່າງໃບອະນຸຍາດສ້າງຕັ້ງບໍລິສັດໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອຂໍອະນຸມັດລາຍເຊັນ;

8. ອຳນວຍຄວາມສະດວກດ້ານກົດໝາຍ ແລະ ລະບຽບການ ເພື່ອຊຸກຍູ້ສົ່ງເສີມການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

9. ສ້າງຄວາມຮູ້ຄວາມເຂົ້າໃຈ ກ່ຽວກັບການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃຫ້ແກ່ສັງຄົມ, ໂດຍການສ້າງບັນດາບົດແນະນຳ , ເຄື່ອງມື, ສັນຍາມາດຕະຖານ, ລະບົບການຄຸ້ມຄອງຂໍ້ມູນ ແລະ ເວັບໄຊ໌ ຂອງ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

10. ສ້າງລະບຽບການ ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ ທຶນສຳລັບການກະກຽມໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອນຳສະເໜີຂໍພິຈາລະນາ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ໂດຍສອດຄ່ອງກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;

11. ຄຸ້ມຄອງ ແລະ ບໍລິຫານການນຳໃຊ້ທຶນສຳລັບການກະກຽມໂຄງການ , ບັນດາຊ່ຽວຊານ ແລະ ທີ່ປຶກສາທີ່ຖືກວ່າຈ້າງມາຊ່ວຍເຈົ້າຂອງໂຄງການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນການກະກຽມໂຄງການ, ການປະມູນ ແລະ ການສ້າງຄວາມສາມາດທີ່ກ່ຽວຂ້ອງດ້ານອື່ນໆ;

12. ເກັບຄ່າທຳນຽມ ແລະ ຄ່າບໍລິການ ຕາມລະບຽບການ;

13. ຄຸ້ມຄອງ ແລະ ເກັບຄືນ ທຶນສຳລັບກະກຽມໂຄງການ ໂດຍການເປີດບັນຊີສະເພາະ ຢູ່ ຄັງເງິນແຫ່ງຊາດ;

14. ສ້າງບົດແນະນຳກ່ຽວກັບການຄັດເລືອກ, ຄຸ້ມຄອງຊ່ຽວຊານ ແລະ ທີ່ປຶກສາ;

15. ລາຍງານສະພາບ ແລະ ຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດບັນດາໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ກຳລັງຈັດຕັ້ງປະຕິບັດໃນປະຈຸບັນ ເປັນປະຈຳໄຕມາດ ແລະ ປະຈຳປີ.

## ໝວດທີ 4
## ການກະກຽມ ແລະ ການອະນຸມັດໂຄງການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ເອກະຊົນ

### ມາດຕາ 26 ບົດສະເໜີເບື້ອງຕົ້ນ ຂອງໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ

ບົດສະເໜີເບື້ອງຕົ້ນ ຂອງໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແມ່ນເອກະສານສະເໜີແນວຄວາມຄິດເບື້ອງຕົ້ນ ຂອງບັນດາຂະແໜງການ ຫຼື ພາກເອກະຊົນ ທີ່ມີຈຸດປະສົງຢາກພັດທະນາໂຄງການ ໃນຮູບແບບການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຊຶ່ງເນື້ອໃນລະອຽດຂອງບົດສະເໜີເບື້ອງຕົ້ນ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

### ມາດຕາ 27 ການສະເໜີ ແລະ ການພິຈາລະນາ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ

ຂະແໜງການ ທີ່ມີຈຸດປະສົງຢາກພັດທະນາໂຄງການ ໃນຮູບແບບການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຢູ່ຂັ້ນສູນກາງ ຕ້ອງຍື່ນ ບົດສະເໜີເບື້ອງຕົ້ນ ຕໍ່ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອນຳສະເໜີ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາ ພາຍໃນ ສິບຫ້າ ວັນລັດຖະການ.

ສຳລັບຂັ້ນແຂວງ ຂະແໜງການ ທີ່ມີຈຸດປະສົງຢາກພັດທະນາໂຄງການ ໃນຮູບແບບການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແມ່ນໃຫ້ຍື່ນ ບົດສະເໜີເບື້ອງຕົ້ນ ທີ່ໄດ້ຮັບການເຫັນດີດ້ານຫຼັກການ ຕາມສາຍຕັ້ງຂອງຕົນ ຕໍ່ພະແນກແຜນການ ແລະ ການລົງທຶນ ແຂວງ, ນະຄອນຫຼວງ ເພື່ອຄົ້ນຄວ້າ-ສັງລວມ ແລ້ວສະເໜີຕໍ່ມາຍັງ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ກົມສົ່ງເສີມການລົງທຶນ ໃນນາມຫ້ອງການບໍລິການ ການລົງທຶນປະຕູດຽວ ນຳສະເໜີ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາ.

ໃນກໍລະນີໄດ້ຮັບການຮັບຮອງຈາກ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ແລ້ວ, ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕ້ອງແຈ້ງໃຫ້ຂະແໜງການກ່ຽວຂ້ອງຊາບພາຍໃນ ຫ້າ ວັນລັດຖະການ ເພື່ອກ້າວເຂົ້າສູ່ການສ້າງບົດສຶກສາຄວາມເປັນໄປໄດ້ ທາງດ້ານເສດຖະກິດ-ເຕັກນິກ, ບົດປະເມີນຜົນກະທົບດ້ານສິ່ງແວດລ້ອມ-ສັງຄົມ ແລະ ທຳມະຊາດ ແບບລະອຽດຂອງໂຄງການ.

### ມາດຕາ 28 ບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຂອງ ໂຄງການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ

ບົດສຶກສາຄວາມເປັນໄປໄດ້ ທາງດ້ານເສດຖະກິດ-ເຕັກນິກ ຂອງໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແມ່ນເອກະສານທີ່ກຳນົດຮູບແບບ , ລັກສະນະ ແລະ ອາຍຸ ຂອງໂຄງການລົງທຶນ ທີ່ສະແດງໃຫ້ເຫັນຄວາມສອດຄ່ອງທາງດ້ານເຕັກນິກ, ຜົນປະໂຫຍດທາງດ້ານເສດຖະກິດ-ສັງຄົມ, ຄວາມສອດ

ຄ່ອງທາງດ້ານກົດໝາຍ ແລະ ຄວາມເປັນໄປໄດ້ທາງດ້ານການເງິນ, ຮັບປະກັນລັກສະນະຂອງຄວາມສ່ຽງ , ຄວາມຍືນຍົງຂອງໂຄງການ, ງົບປະມານ, ບັນຫາດ້ານສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ , ບັນຫາບົດບາດຍິງ-ຊາຍ, ລວມທັງກຳນົດລະອຽດການສະໜັບສະໜູນຂອງລັດຖະບານ ຕໍ່ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ.

ສຳລັບເນື້ອໃນລະອຽດຂອງບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຂອງໂຄງການໄດ້ກຳນົດໄວ້ໃນລະບຽບການສະເພາະ ຂອງຂະແໜງການກ່ຽວຂ້ອງ.

ພາຍຫຼັງສຳເລັດການສຶກສາຄວາມເປັນໄປໄດ້ ທາງດ້ານເສດຖະກິດ-ເຕັກນິກ ຂອງໂຄງການ, ພາຍໃນສິບຫ້າວັນ ວັນລັດຖະການ ເຈົ້າຂອງໂຄງການ ຕ້ອງນຳສະເໜີບົດສຶກສາດັ່ງກ່າວ ໃຫ້ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເອົາເຂົ້າກອງປະຊຸມ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ເພື່ອພິຈາລະນາ ແລະ ຮັບຮອງ ຕາມລະບຽບການ.

**ມາດຕາ 29 ການສະເໜີ ແລະ ການພິຈາລະນາ ບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຂອງໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຄົ້ນຄວ້າບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ບົດລາຍງານ ການປະເມີນຜົນກະທົບດ້ານສິ່ງແວດລ້ອມ-ສັງຄົມ ແລະ ທຳມະຊາດ ຂອງໂຄງການ ແລ້ວນຳສະເໜີ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາ ພາຍໃນກຳນົດເວລາ ຫົກສິບຫ້າ ວັນລັດຖະການ ນັບແຕ່ວັນໄດ້ຮັບການສະເໜີເປັນຕົ້ນໄປ:

1. ຕົກລົງເຫັນດີ ດ້ານຫຼັກການ ຮັບຮອງເອົາຜົນຂອງການສຶກສາຄວາມເປັນໄປໄດ້ ທາງດ້ານເສດຖະກິດ-ເຕັກນິກ ຂອງໂຄງການພ້ອມທັງອະນຸຍາດໃຫ້ເຈົ້າຂອງໂຄງການດຳເນີນການສ້າງຊຸດເອກະສານປະມູນ; ຫຼື

2. ເລື່ອນການພິຈາລະນາ ການຮັບຮອງເອົາ ບົດສຶກສາຄວາມເປັນໄປໄດ້ ທາງດ້ານເສດຖະກິດ-ເຕັກນິກ ຂອງໂຄງການ ໃນກໍລະນີບົດສຶກສາ ຍັງບໍ່ສາມາດຮັບຮອງໄດ້ ແລ້ວສະເໜີໃຫ້ ເຈົ້າຂອງໂຄງການ ໃຫ້ຄວາມກະຈ່າງແຈ້ງ ແລະ/ຫຼື ປັບປຸງເພີ່ມເຕີມ ບົດສຶກສາຄວາມເປັນໄປໄດ້ ທາງດ້ານເສດຖະກິດ-ເຕັກນິກ ຂອງໂຄງການ ໃຫ້ຄົບຖ້ວນ ແລະ ສົມບູນ; ຫຼື

3. ປະຕິເສດ ການຮັບຮອງເອົາບົດສຶກສາຄວາມເປັນໄປໄດ້ ທາງດ້ານເສດຖະກິດ-ເຕັກນິກ ຂອງໂຄງການ ແລະ ບໍ່ອະນຸຍາດດຳເນີນໂຄງການຕາມຮູບແບບການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ, ໃນກໍລະນີໂຄງການ ບໍ່ສາມາດພັດທະນາໄດ້ ໃນຮູບແບບການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

ກໍລະນີ ຜົນຂອງການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກຂອງໂຄງການ ລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ຖືກຮັບຮອງ ມີທຶນປະກອບສ່ວນຂອງລັດ ກວມເອົາແຕ່ ສາມສິບສ່ວນຮ້ອຍ (30%) ຂອງທຶນທັງໝົດຂຶ້ນໄປ ໃຫ້ປະຕິບັດຕາມກົດໝາຍ ວ່າດ້ວຍການລົງທຶນຂອງລັດ. ຖ້າວ່າທຶນຂອງລັດຖະບານຫາກຕໍ່າກວ່າ ສາມສິບ ສ່ວນຮ້ອຍ (30%) ຂອງທຶນທັງໝົດ ໃຫ້ປະຕິບັດຕາມການຕົກລົງ ຂອງລັດຖະບານ;

ໃນກໍລະນີ ໃຫ້ມີການເລື່ອນການພິຈາລະນາ, ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕ້ອງກຳນົດເວລາ ໃຫ້ເຈົ້າຂອງໂຄງການມາອະທິບາຍ ແລະ/ຫຼື ປັບປຸງ ບົດສຶກສາຄວາມເປັນໄປໄດ້ ທາງດ້ານເສດຖະກິດ-ເຕັກນິກ ຂອງໂຄງການ ພາຍໃນ ຫົກສິບວັນ ວັນລັດຖະການ . ພາຍຫຼັງປັບປຸງສຳເລັດ ເຈົ້າຂອງໂຄງການ ຕ້ອງຍື່ນສະເໜີໂຄງການຂອງຕົນຄືນ ຕໍ່ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພາຍໃນເວລາທີ່ໄດ້ກຳນົດໄວ້, ຊຶ່ງການສະເໜີຂໍພິຈາລະນາຄືນສູງສຸດບໍ່ໃຫ້ເກີນ ສອງ ຄັ້ງ.

**ມາດຕາ 30 ເງື່ອນໄຂ ແນວຄວາມຄິດລິເລີ່ມ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ແນວຄວາມຄິດລິເລີ່ມ ຂອງ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ສະເໜີຂໍລົງທຶນ ໂດຍພາກເອກະຊົນ ຫຼື ເຈົ້າຂອງໂຄງການ ຕ້ອງສອດຄ່ອງກັບເງື່ອນໄຂ ດັ່ງນີ້:

1. ເປັນໂຄງການທີ່ມີຄວາມຈຳເປັນ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ;
2. ເປັນໂຄງການທີ່ຖືກສ້າງຂຶ້ນ, ແນວຄວາມຄິດລິເລີ່ມ ແລະ ຍື່ນສະເໜີໂດຍ ພາກເອກະຊົນ ຫຼື ເຈົ້າຂອງໂຄງການ;
3. ມີຜົນຕອບແທນສູງ ແລະ ກວ້າງຂວາງ ທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ;
4. ຖືກສ້າງຂຶ້ນດ້ວຍຄ່າໃຊ້ຈ່າຍຂອງພາກເອກະຊົນ ໂດຍບໍ່ຮຽກຮ້ອງຂໍການສະໜັບສະໜູນ ດ້ານການເງິນ ຫຼື ການສະໜັບສະໜູນ ນະໂຍບາຍດ້ານ ພາສີ-ອາກອນ ຈາກລັດຖະບານ ໃນການກະກຽມ ແລະ ດຳເນີນໂຄງການ;
5. ພາກເອກະຊົນຕ້ອງຮັບຜິດຊອບຕໍ່ຄວາມສ່ຽງຕ່າງໆ ຂອງໂຄງການ;
6. ມີຂໍ້ມູນລະອຽດ ແລະ ພຽງພໍ ໃຫ້ເຈົ້າຂອງໂຄງການ ປະເມີນ ຫຼື ສືບຕໍ່ ສ້າງບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ລະອຽດຂອງໂຄງການ.

**ມາດຕາ 31 ການສະເໜີ ແລະ ການພິຈາລະນາແນວຄວາມຄິດລິເລີ່ມ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ພາກເອກະຊົນ ຫຼື ເຈົ້າຂອງໂຄງການ ທີ່ມີຈຸດປະສົງຢາກພັດທະນາໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຂັ້ນສູນກາງ ຕ້ອງຍື່ນບົດວິພາກເສດຖະກິດ-ເຕັກນິກ ແລະ ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທຳ ມະຊາດ ຂອງໂຄງການເບື້ອງຕົ້ນ ຕໍ່ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອນຳສະເໜີ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ເພື່ອພິຈາລະນາ.

ສຳລັບຂັ້ນແຂວງ ພາກເອກະຊົນ ຫຼື ເຈົ້າຂອງໂຄງການ ທີ່ມີຈຸດປະສົງຢາກພັດທະນາໂຄງການ ໃນຮູບແບບການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແມ່ນໃຫ້ຍື່ນ ບົດສະເໜີເບື້ອງຕົ້ນ ທີ່ໄດ້ຮັບການເຫັນດີດ້ານຫຼັກການຕາມສາຍຕັ້ງຂອງຕົນ ຕໍ່ພະແນກແຜນການ ແລະ ການລົງທຶນ ແຂວງ, ນະຄອນຫຼວງ ເພື່ອຄົ້ນຄວ້າ-ສັງລວມ ແລ້ວສະເໜີມາຍັງ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ກົມສົ່ງເສີມການລົງທຶນ ໃນນາມຫ້ອງການບໍລິການ ການລົງທຶນປະຕູດຽວ ນຳສະເໜີ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາ.

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕ້ອງພິຈາລະນາ ພາຍໃນກຳນົດເວລາ ຫົກສິບຫ້າວັນລັດຖະການ ຫຼັງຈາກໄດ້ຮັບບົດວິພາກເສດຖະກິດ-ເຕັກນິກຂອງໂຄງການເບື້ອງຕົ້ນ.

ໃນກໍລະນີ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຄົ້ນຄວ້າແລ້ວເຫັນວ່າ ບົດວິພາກເສດຖະກິດ-ເຕັກນິກ ຂອງໂຄງການເບື້ອງຕົ້ນ ມີຄວາມຄົບຖ້ວນ ແລະ ສົມບູນແລ້ວ ກໍຮັບຮອງເອົາ ເພື່ອໃຫ້ກະຊວງແຜນການ ແລະ ການລົງທຶນ ສະເໜີຕໍ່ລັດຖະບານພິຈາລະນາອະນຸມັດ. ຫຼັງຈາກໄດ້ຮັບການອະນຸມັດຈາກລັດຖະບານແລ້ວ ໃຫ້ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແຈ້ງຕໍ່ ເຈົ້າຂອງໂຄງການ ເພື່ອດຳເນີນການສ້າງຊຸດເອກະສານປະມູນ ໃນຂັ້ນຕໍ່ໄປ.

ໃນກໍລະນີ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຄົ້ນຄວ້າແລ້ວເຫັນວ່າ ບົດວິພາກເສດຖະກິດ-ເຕັກນິກຂອງໂຄງການເບື້ອງຕົ້ນ ຍັງບໍ່ຄົບຖ້ວນ ແລະ ສົມບູນ ແມ່ນຈະເລື່ອນການພິຈາລະນາອອກໄປໂດຍໃຫ້ ພາກເອກະຊົນ ຫຼື ເຈົ້າຂອງໂຄງການ ປັບປຸງບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຂອງໂຄງການ ໂດຍສອດຄ່ອງກັບ ມາດຕາ 28 ຂອງດຳລັດສະບັບນີ້ ພາຍໃນກຳນົດເວລາ ຫົກສິບວັນລັດຖະການ ນັບແຕ່ມີການແຈ້ງເປັນລາຍລັກອັກສອນໃຫ້ ພາກເອກະຊົນ ຫຼື ເຈົ້າຂອງໂຄງການ. ພາຍຫຼັງ

ປັບປຸງສຳເລັດ ພາກເອກະຊົນ ຫຼື ເຈົ້າຂອງໂຄງການ ຕ້ອງຍື່ນສະເໜີໂຄງການຂອງຕົນຄືນຕໍ່ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພາຍໃນເວລາທີ່ໄດ້ກຳນົດໄວ້ ແຕ່ສູງສຸດບໍ່ໃຫ້ເກີນ ສອງ ຄັ້ງ.

ໃນກໍລະນີ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຄົ້ນຄວ້າແລ້ວເຫັນວ່າ ບົດວິພາກເສດຖະກິດ-ເຕັກນິກ ຂອງໂຄງການ ບໍ່ສອດຄ່ອງກັບເງື່ອນໄຂທີ່ກຳນົດໃນ ມາດຕາ 28 ຂອງດຳລັດສະບັບນີ້ແລ້ວ ຈະບໍ່ອະນຸຍາດດຳເນີນໂຄງການຕາມຮູບແບບການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ພ້ອມທັງແຈ້ງໃຫ້ ພາກເອກະຊົນ ຫຼື ເຈົ້າຂອງໂຄງການ ພາຍໃນກຳນົດເວລາ ສາມ ວັນລັດຖະການ.

ພາກເອກະຊົນ ຫຼື ເຈົ້າຂອງໂຄງການ ທີ່ຍື່ນບົດສະເໜີ ແນວຄວາມຄິດລິເລີ່ມ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຈະບໍ່ໄດ້ຮັບບູລິມະສິດ ໃນການພັດທະນາໂຄງການໂດຍກົງ, ແຕ່ຕ້ອງເຂົ້າຮ່ວມຂະບວນການປະມູນຕາມຂໍ້ກຳນົດທີ່ໄດ້ລະບຸໄວ້ໃນດຳລັດ ແລະ ລະບຽບການຈັດຕັ້ງປະຕິບັດດຳລັດສະບັບນີ້. ໃນກໍລະນີຜູ້ຍື່ນບົດສະເໜີເບື້ອງຕົ້ນຂອງໂຄງການດັ່ງກ່າວ ຫາກບໍ່ໄດ້ຮັບການຄັດເລືອກ ໃຫ້ເປັນຜູ້ຊະນະການປະມູນ, ເຈົ້າຂອງໂຄງການ ອາດພິຈາລະນາການຊົດເຊີຍຄ່າແນວຄວາມຄິດລິເລີ່ມດັ່ງກ່າວ ແລະ/ຫຼື ຄ່າໃຊ້ຈ່າຍ ໃນການສ້າງບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ - ເຕັກນິກເບື້ອງຕົ້ນ ຂອງໂຄງການໃຫ້ແກ່ຜູ້ທີ່ຍື່ນບົດສະເໜີເບື້ອງຕົ້ນດັ່ງກ່າວ, ໂດຍຄ່າໃຊ້ຈ່າຍດັ່ງກ່າວຕ້ອງຖືກບັນຈຸເຂົ້າເປັນຕົ້ນທຶນ ຂອງໂຄງການ ແລະ ຕ້ອງກຳນົດແຈ້ງໃນ ຊຸດເອກະສານປະມູນ.

## ໝວດທີ 5
## ການປະມູນໂຄງການ

### ມາດຕາ 32 ການປະມູນໂຄງການ

ການປະມູນໂຄງການ ແມ່ນການຂະບວນການຄັດເລືອກຄູ່ສັນຍາພາກເອກະຊົນທີ່ມີຄວາມໂປ່ງໃສ ແລະ ຍຸຕິທຳ ໂດຍສອດຄ່ອງກັບດຳລັດສະບັບນີ້ ແລະ ກົດໝາຍທີ່ກ່ຽວຂ້ອງ.

ພາຍຫຼັງໄດ້ຮັບການເຫັນດີ ຈາກລັດຖະບານ ເຈົ້າຂອງໂຄງການ ຕ້ອງປະສານສົມທົບກັບ ຄະນະກຳມະການປະມູນ ແລະ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ດຳເນີນຂັ້ນຕອນການປະມູນ ໂດຍສອດຄ່ອງກັບຂໍ້ກຳນົດຂອງດຳລັດສະບັບນີ້ ແລະ ລະບຽບການກ່ຽວຂ້ອງ ແລະ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕ້ອງເຜີຍແຜ່ໂດຍຜ່ານສື່ມວນຊົນ ພາຍໃນ ຫ້າ ວັນລັດຖະການຫຼັງມີມະຕິຕົກລົງຂອງ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ.

ການປະມູນໂຄງການທີ່ນຳໃຊ້ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ກໍ່ໃຫ້ປະຕິບັດຕາມຂັ້ນຕອນ ແລະ ລະບຽບການ, ເວັ້ນເສຍແຕ່ກໍລະນີ ຜູ້ໃຫ້ທຶນ ໄດ້ກຳນົດລະບຽບການ ແລະ ຂັ້ນຕອນດຳເນີນການປະມູນໄວ້ຕ່າງຫາກ, ແຕ່ເຈົ້າຂອງໂຄງການ ຕ້ອງແຈ້ງໃຫ້ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຮັບຊາບ.

ສະຖານທີ່ປະມູນແມ່ນຈັດຢູ່ ກະຊວງ ແຜນການ ແລະ ການລົງທຶນ.

### ມາດຕາ 33 ຫຼັກການ ການປະມູນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ

ຫຼັກການ ການປະມູນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕ້ອງປະຕິບັດ ດັ່ງນີ້:

1. ຮັບປະກັນການເປີດກວ້າງແຂ່ງຂັນການປະມູນສາກົນ, ມີຄວາມໂປ່ງໃສ, ສາມາດກວດສອບ ໄດ້, ມີຄວາມສະເໝີພາບ ແລະ ຍຸຕິທຳ ຕໍ່ຜູ້ທີ່ມີຄວາມສົນໃຈ ແລະ ຜູ້ເຂົ້າຮ່ວມແຂ່ງຂັນປະມູນ ຕະຫຼອດໄລຍະການປະມູນ ແລະ ການຄັດເລືອກຜູ້ຊະນະການປະມູນ;

2. ພາກລັດ ແລະ ພາກເອກະຊົນມີສິດສະເໝີພາບໃນການໄດ້ຮັບ ແລະ ເຂົ້າເຖິງຂໍ້ມູນຂ່າວສານໃນທຸກຂັ້ນຕອນຂອງການປະມູນ;

3. ຫຼີກເວັ້ນການສ້າງຂໍ້ຈຳກັດທີ່ເປັນອຸປະສັກກີດກັ້ນ ແລະ ລະເມີດສິດຂອງບັນດາຝ່າຍ ໃນການເຂົ້າຮ່ວມການປະມູນ;

4. ບັນດາຜູ້ທີ່ມີຄວາມສົນໃຈ, ຜູ້ເຂົ້າຮ່ວມແຂ່ງຂັນປະມູນ, ຜູ້ຮັບເໝົາ, ຂະແໜງການກ່ຽວຂ້ອງພາກລັດ, ເຈົ້າໜ້າທີ່, ພະນັກງານລັດ, ພາກເອກະຊົນ ແລະ ພາກສ່ວນອື່ນໆ ຕ້ອງມີຈັນຍາບັນ ແລະ ປະຕິບັດຕາມລະບຽບການ ແລະ ຂໍ້ກຳນົດໃນຂະບວນການປະມູນ ຢ່າງເຄັ່ງຄັດ;

5. ການຈັດຕັ້ງປະມູນທີ່ບໍ່ສອດຄ່ອງ ກັບດຳລັດສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຖືວ່າເປັນໂມຄະ.

## ມາດຕາ 34 ຊຸດເອກະສານປະມູນ

ເຈົ້າຂອງໂຄງການ ຮ່ວມກັບຄະນະກຳມະການປະມູນ ຕ້ອງກະກຽມຊຸດເອກະສານປະມູນ ສຳລັບໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍສອດຄ່ອງ ກັບ ຂໍ້ກຳນົດ ແລະ ລະບຽບການສະເພາະ.

ພາຍຫຼັງມີມະຕິຕົກລົງຂອງ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ເຈົ້າຂອງໂຄງການຕ້ອງດຳເນີນການກະກຽມເອກະສານປະມູນ ໃຫ້ສຳເລັດ ພາຍໃນ ສາມສິບວັນ ວັນລັດຖະການ.

ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ກວດກາຄວາມຖືກຕ້ອງ ແລະ ສົມບູນຂອງຊຸດເອກະສານປະມູນ ພາຍໃນກຳນົດເວລາ ສິບ ວັນລັດຖະການ. ຫຼັງຈາກນັ້ນຕ້ອງລົງໂຄສະນາເຜີຍແຜ່ຜ່ານສື່ມວນຊົນເພື່ອຮຽກເຊີນການເຂົ້າຮ່ວມປະມູນ ພາຍໃນກຳນົດເວລາ ເຈັດ ວັນລັດຖະການ.

## ມາດຕາ 35 ຂັ້ນຕອນການປະມູນ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ

ເຈົ້າຂອງໂຄງການ ສົມທົບກັບ ຄະນະກຳມະການປະມູນ ຕ້ອງດຳເນີນຂັ້ນຕອນການຄັດເລືອກຜູ້ເຂົ້າຮ່ວມປະມູນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍຜ່ານ ສອງ ຂັ້ນຕອນ ຄື:

1. ຄັດເລືອກຄຸນວຸດທິຂອງຜູ້ເຂົ້າຮ່ວມປະມູນ;

2. ເປີດການແຂ່ງຂັນດ້ານລາຄາ ໂດຍສອດຄ່ອງກັບຂັ້ນຕອນທີ່ລະບຸໄວ້ໃນເອກະສານຊ້ອນທ້າຍຂອງດຳລັດສະບັບນີ້.

## ມາດຕາ 36 ການປະເມີນການປະມູນ

ຄະນະກຳມະການປະມູນ ຕ້ອງໄດ້ພິຈາລະນາ ແລະ ປະເມີນຊຸດເອກະສານປະມູນທີ່ໄດ້ຮັບ ຫຼັງຈາກນັ້ນຕ້ອງເຮັດບົດລາຍງານ ແລະ ສະເໜີຜົນການຄັດເລືອກຜູ້ຊະນະການປະມູນ ເພື່ອນຳສະເໜີໃຫ້ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຮັບຮອງ ໂດຍຜ່ານ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ.

ໃນຂະບວນການປະມູນ, ການປະເມີນຜົນ ແລະ ການພິຈາລະນາຕົກລົງຮັບຮອງເອົາບົດສະເໜີໂຄງການຕ້ອງດຳເນີນໂດຍອີງໃສ່ເງື່ອນໄຂທາງດ້ານ ການເງິນ, ເສດຖະກິດ-ເຕັກນິກ, ສິ່ງແວດລ້ອມ-ສັງຄົມ ແລະ ທຳ

ມະຊາດ, ລວມທັງບົດບາດ ຍິງ-ຊາຍ ທີ່ກຳນົດໂດຍຄະນະກຳມະການປະມູນ ເພື່ອໃຫ້ໄດ້ຄວາມຄຸ້ມຄ່າຂອງເງິນລົງທຶນ (value for money).

## ໝວດທີ 6
## ສັນຍາໂຄງການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ

### ມາດຕາ 37 ສັນຍາການລົງທຶນຮ່ວມລະຫວ່າງ ພາກລັດແລະ ພາກເອກະຊົນ

ສັນຍາການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ ແມ່ນ ເອກະສານຂໍ້ຜູກພັນກັນລະຫວ່າງລັດຖະບານ, ຕາງໜ້າ ໂດຍຂະແໜງແຜນການ ແລະ ການລົງທຶນ ແລະ ບໍລິສັດໂຄງການ ໃນການພັດທະນາ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ.

ທຸກໂຄງການລົງທຶນຮ່ວມ ລະຫວ່າງພາກລັດ ແລະ ພາກເອກະຊົນ ຕ້ອງມີສັນຍາຮ່ວມລົງທຶນລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ກຳນົດເງື່ອນໄຂທີ່ຈະແຈ້ງ ແລະ ກຳນົດເວລາທີ່ແນ່ນອນ.

ສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ເຊັນກັນໂດຍບໍ່ຜ່ານຂັ້ນຕອນການປະມູນ ໂດຍບໍ່ສອດຄ່ອງກັບ ດຳລັດສະບັບນີ້, ກົດໝາຍ ແລະ ລະບຽບການທີ່ບໍ່ກ່ຽວຂ້ອງ ຂອງ ສປປ ລາວ ຖືວ່າເປັນໂມຄະ.

### ມາດຕາ 38 ເນື້ອໃນຂອງສັນຍາລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ

ສັນຍາລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕ້ອງກຳນົດເນື້ອໃນຊັດເຈນ, ເວລາທີ່ແນ່ນອນ ໂດຍສອດຄ່ອງກັບບັນດາຂໍ້ກຳນົດທີ່ໄດ້ລະບຸໄວ້ໃນດຳລັດສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ.

ເນື້ອໃນສຳຄັນພື້ນຖານ ຂອງສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕ້ອງປະກອບມີ:

- ຂອບໜ້າວຽກຂອງໂຄງການ;
- ຄວາມຮັບຜິດຊອບຂອງບັນດາຝ່າຍຊຶ່ງລວມມີ ລັດຖະບານ, ຄູ່ສັນຍາພາກລັດ ແລະ ພາກເອກະຊົນ;
- ຂອບເຂດຄວາມຮັບຜິດຊອບຕໍ່ຄວາມສ່ຽງໂຄງການຂອງບັນດາຝ່າຍ;
- ພັນທະທາງດ້ານພາສີ-ອາກອນ ຂອງ ພາກເອກະຊົນ;
- ສິດໃຊ້ທີ່ດິນ, ເຂົ້າໄປໃນພື້ນທີ່ໂຄງການ ແລະ ນຳໃຊ້ສິ່ງອຳນວຍຄວາມສະດວກຕ່າງໆ ໃນພື້ນທີ່ໂຄງການ;
- ໄລຍະເວລາ ກໍ່ສ້າງ, ມື້ເລີ່ມດຳເນີນງານ, ດຳເນີນທຸລະກິດ ແລະ ບຳລຸງຮັກສາ;
- ມາດຕະຖານໃນການປະຕິບັດງານ ທາງດ້ານເຕັກນິກ, ຄຸນນະພາບ ແລະ ຄວາມປອດໄພ;
- ບັນຫາການເງິນ, ການຄ້ຳປະກັນ, ການສຳລະຊະສາງ ແລະ ມາດຕະການປັບໃໝ ໃນກໍລະນີທີ່ບໍລິສັດໂຄງການ ບໍ່ສາມາດປະຕິບັດໄດ້ ຕາມມາດຕະຖານ ທີ່ລະບຸໄວ້ໃນສັນຍາ;
- ການທົບທວນ ແລະ ດັດແກ້ຫຼືໜ່ວຍລາຄາ;
- ສິດໃນການເຂົ້າໄປແຊກແຊງໃນໂຄງການຂອງລັດຖະບານ ແລະ ຜູ້ສະໜອງທຶນ ໃນກໍລະນີໂຄງ ການມີບັນຫາ;
- ການທົບທວນຄືນ, ການປັບປຸງ ຫຼື ປ່ຽນແປງສັນຍາ;

- ການປ່ຽນແປງເງື່ອນໄຂຂອງຂອບໜ້າວຽກ, ການປັບປຸງເຕັກໂນໂລຢີທີ່ທັນສະໄໝ;
- ການຕິດຕາມກວດກາ ແລະ ການລາຍງານ;
- ການວາງແຜນຄ່າໃຊ້ຈ່າຍບັງເອີນ;
- ການກຳນົດກົນໄກແກ້ໄຂຂໍ້ຂັດແຍ່ງ;
- ການກຳນົດອາຍຸສັນຍາ;
- ການຄຸ້ມຄອງໂຄງການ;
- ການຄຸ້ມຄອງການປະຕິບັດສັນຍາ.

ນອກຈາກບັນດາຂໍ້ກຳນົດໃນມາດຕານີ້ ຄູ່ສັນຍາ ສາມາດຕົກລົງເງື່ອນໄຂສະເພາະໃດໜຶ່ງຕື່ມອີກ ແຕ່ ຕ້ອງບໍ່ຂັດກັບດຳລັດສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງອື່ນ ຂອງ ສປປ ລາວ, ລະບຽບການ ແລະ ນະໂຍບາຍສະເພາະຂອງ ຜູ້ໃຫ້ທຶນ, ໂດຍໄດ້ຮັບການຮັບຮອງຈາກ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຫຼື ລັດຖະບານ.

## ໝວດທີ 7
## ການພິຈາລະນາສັນຍາ, ການເຊັນສັນຍາ ແລະ ການປ່ຽນແປງສັນຍາ

### ມາດຕາ 39 ຂັ້ນຕອນການພິຈາລະນາສັນຍາ

ຂັ້ນຕອນການພິຈາລະນາສັນຍາ ຕ້ອງປະຕິບັດ ດັ່ງນີ້:

1. ພາຍຫຼັງຄັດເລືອກໄດ້ຜູ້ຊະນະການປະມູນແລ້ວ ກະຊວງແຜນການ ແລະ ການລົງທຶນ ສົມທົບກັບ ເຈົ້າຂອງໂຄງການ ຫຼື ຜູ້ພັດທະນາໂຄງການ ປຶກສາຫາລືຂັ້ນສຸດທ້າຍຕໍ່ຮ່າງສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ໄດ້ຜ່ານການປະມູນແລ້ວ ຕ້ອງໃຫ້ສຳເລັດ ພາຍໃນກຳນົດເວລາ ສາມສິບ ວັນ ລັດຖະການ;

2. ຫຼັງຈາກນັ້ນ, ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕ້ອງນຳສະເໜີຮ່າງ ສັນຍາ ພ້ອມດ້ວຍລາຍລະອຽດຂອງໂຄງການ ຕໍ່ກອງປະຊຸມ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການ ລົງທຶນ ພິຈາລະນາ;

3. ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາ ຮ່າງສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອນຳສະເໜີ ລັດຖະບານ ພິຈາລະນາ. ໃນກໍລະນີຈຳເປັນຕ້ອງປັບປຸງ ເນື້ອໃນຮ່າງສັນຍາ ແລະ ໂຄງການຄືນ, ເຈົ້າຂອງໂຄງການ ຕ້ອງທົບທວນ ແລະ ປັບປຸງພາຍໃນໄລຍະເວລາທີ່ ເໝາະສົມ ແລ້ວນຳສະເໜີຕໍ່ລັດຖະບານ ໂດຍຜ່ານ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຄືນ ໃໝ່. ການນຳສະເໜີ ພິຈາລະນາຄືນໃໝ່ສູງສຸດປະຕິບັດບໍ່ເກີນ ໜຶ່ງ ຄັ້ງ.

ເມື່ອມີການຮັບຮອງຮ່າງສັນຍາ ແລະ ໄດ້ຜ່ານການປະມູນແລ້ວ ແຕ່ຢູ່ໃນໄລຍະລໍຖ້າມະຕິຕົກລົງໃຫ້ເຊັນ ສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ລັດຖະບານ ແລະ ຜູ້ພັດທະນາໂຄງການ ບໍ່ ສາມາດປ່ຽນແປງເນື້ອໃນພື້ນຖານຂອງຮ່າງສັນຍາ ທີ່ໄດ້ຜ່ານການປະມູນແລ້ວ, ເວັ້ນເສຍແຕ່ ມີການປ່ຽນແປງ ຂອງສະພາບການ ຫຼື ຜູ້ຊະນະປະມູນ ບໍ່ສາມາດປະຕິບັດເງື່ອນໄຂຂອງຜູ້ຊະນະການປະມູນ.

ຖ້າໂຄງການມີການສະເໜີຂໍຍົກເວັ້ນ ການປະຕິບັດຂໍ້ກຳນົດໃດໜຶ່ງ ຂອງກົດໝາຍ, ຄະນະກຳມະການ ສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕ້ອງນຳສະເໜີລັດຖະບານ ແລະ ສະພາແຫ່ງຊາດພິຈາລະນາຕາມກົດໝາຍ.

**ມາດຕາ 40 ຂັ້ນຕອນການເຊັນສັນຍາ**

ການເຊັນສັນຍາ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ໃນກໍລະນີ ລັດຖະບານເຫັນດີ, ຂະແໜງແຜນການ ແລະ ການລົງທຶນ ຕ້ອງລາຍງານລັດຖະບານ ເພື່ອຂໍໃບມອບສິດໃນການເຊັນສັນຍາ;

2. ເມື່ອມີໃບມອບສິດ ຈາກລັດຖະບານ ໃຫ້ເຊັນສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ, ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕ້ອງແຈ້ງເປັນລາຍລັກອັກສອນ ໃຫ້ຜູ້ຊະນະການປະມູນຊາບ ພາຍໃນ ຫ້າ ວັນ ລັດຖະການ;

3. ຜູ້ຊະນະການປະມູນ ພ້ອມດ້ວຍຜູ້ຮ່ວມພັດທະນາ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕ້ອງສະເໜີຂໍອະນຸຍາດສ້າງຕັ້ງ ບໍລິສັດໂຄງການ ຕໍ່ ຂະແໜງແຜນການ ແລະ ການລົງທຶນ ພາຍໃນ ສິບຫ້າ ວັນລັດຖະການ ກ່ອນການເຊັນສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຢ່າງເປັນທາງການ;

4. ການລົງນາມໃນສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ພາຍໃນ ສາມສິບ ວັນລັດຖະການ, ກໍລະນີຜູ້ລົງທຶນບໍ່ມາເຊັນສັນຍາຕາມ ກຳນົດເວລາດັ່ງກ່າວຖືວ່າຜູ້ຊະນະການປະມູນສະລະສິດໂດຍບໍ່ມີການຮຽກຮ້ອງຄ່າຊົດເຊີຍໃດໆຈາກລັດຖະບານ.

ໃນສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຄູ່ສັນຍາ ແມ່ນ ຂະແໜງແຜນການ ແລະ ການລົງທຶນ, ເຈົ້າຂອງໂຄງການ ເຊັນໃນນາມເປັນພະຍານ ແລະ ເປັນຜູ້ຈັດຕັ້ງປະຕິບັດໂຄງການ.

**ມາດຕາ 41 ການປ່ຽນແປງ ຫຼື ການດັດແກ້ ສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ການປ່ຽນແປງ ຫຼື ການດັດແກ້ ສັນຍາການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ ສາມາດປະຕິບັດໄດ້ ຖ້າມີຄວາມຈຳເປັນ ບົນພື້ນຖານການເຫັນດີ ຂອງຄູ່ສັນຍາ ແລະ ສອດຄ່ອງກັບດຳລັດ ສະບັບນີ້ ແລະ ຂໍ້ກຳນົດທີ່ກ່ຽວຂ້ອງ ຂອງສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ໄດ້ລົງນາມແລ້ວ;

ຖ້າການປ່ຽນແປງ ຫຼື ດັດແກ້ ສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເປັນການປ່ຽນແປງ ທີ່ບໍ່ເປັນພື້ນຖານ, ບໍ່ມີຜົນກະທົບສູງ ຕໍ່ປະສິດທິພາບ ແລະ ປະສິດທິຜົນ ຂອງໂຄງການລົງທຶນ , ຕໍ່ການຈັດແບ່ງຄວາມສ່ຽງຂອງແຕ່ລະຝ່າຍ ຫຼື ບໍ່ມີຜົນກະທົບ ທາງກົງ, ທາງອ້ອມ ຕໍ່ງົບປະມານ , ການຊໍາລະ, ການຄໍ້າປະກັນ ຫຼື ຕໍ່ຄວາມຮັບຜິດຊອບອື່ນໆຂອງລັດຖະບານ ແມ່ນ ເຈົ້າຂອງໂຄງການ ສາມາດສະເໜີຕໍ່ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອພິຈາລະນາຮັບຮອງຕາມລະບຽບການ;

ຖ້າການປ່ຽນແປງ ຫຼື ດັດແກ້ ສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເປັນການປ່ຽນແປງ ທີ່ເປັນພື້ນຖານ, ມີຜົນກະທົບສູງ ຕໍ່ປະສິດທິພາບ ແລະ ປະສິດທິຜົນ ຂອງ ໂຄງການລົງທຶນ , ຕໍ່ການຈັດແບ່ງຄວາມສ່ຽງຂອງແຕ່ລະຝ່າຍ ຫຼື ມີຜົນກະທົບໂດຍກົງ, ທາງອ້ອມ ຕໍ່ງົບປະມານ , ການຊໍາລະ, ການຄໍ້າປະກັນ ຫຼື ຕໍ່ຄວາມຮັບຜິດຊອບອື່ນໆຂອງລັດຖະບານ ແມ່ນ ເຈົ້າຂອງໂຄງການ ຕ້ອງນຳສະເໜີຕໍ່ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍສົມທົບ ກັບເຈົ້າຂອງໂຄງການ, ຫຼັງຈາກນັ້ນ ຈຶ່ງສະເໜີຂໍການພິຈາລະນາຮັບຮອງ ຈາກລັດຖະບານ ໂດຍຜ່ານ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ.

## ໝວດທີ 8
## ການຮັບປະກັນ ແລະ ການຄໍ້າປະກັນ

**ມາດຕາ 42 ການຮັບປະກັນ**

ລັດຖະບານ ຮັບປະກັນ ຈະບໍ່ຍຶດເອົາກຳມະສິດ ຫຼື ຜົນປະໂຫຍດ ຂອງໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ມາເປັນຂອງລັດ, ເວັ້ນເສຍແຕ່ມີຄວາມຈຳເປັນ ເພື່ອສາທາລະນະປະໂຫຍດ ໂດຍ ມີການຊົດເຊີຍ ທີ່ສົມເຫດສົມຜົນ ແລະ ສອດຄ່ອງ ຕາມກົດໝາຍ ໃຫ້ແກ່ ບໍລິສັດໂຄງການ, ຊຶ່ງລາຍລະອຽດ ຂອງການຊົດເຊີຍ ຈະຖືກລະບຸໄວ້ໃນສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍ ສອດຄ່ອງກັບກົດໝາຍ ຂອງ ສປປ ລາວ.

ລັດຖະບານ ຈະບໍ່ຍົກເລີກສັນຍາກ່ອນກຳນົດ, ເວັ້ນເສຍແຕ່ວ່າຜູ້ລົງທຶນລະເມີດສັນຍາ ຫຼື ຖືກປະຕິບັດ ຄຳຕັດສິນຂອງສານ. ໃນກໍລະນີພາກເອກະຊົນ ເປັນຜູ້ກະທຳຜິດ ຫຼື ລະເມີດສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຈະບໍ່ມີການຊົດເຊີຍຈາກລັດຖະບານ.

ລັດຖະບານ ອຳນວຍຄວາມສະດວກ ຫຼື ສ້າງເງື່ອນໄຂໃຫ້ ບໍລິສັດໂຄງການ ຕາມກົດໝາຍຂອງ ສປປ ລາວ ເພື່ອເຂົ້າເຖິງແຫຼ່ງທຶນ, ສາມາດແລກປ່ຽນສະກຸນເງິນ ເປັນ ສະກຸນເງິນຕາຕ່າງປະເທດ ເພື່ອຈຸດປະສົງການ ໂອນເງິນກັບຄືນປະເທດ ແລະ ຊຳລະໜີ້ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

**ມາດຕາ 43 ການຄໍ້າປະກັນ**

ບໍລິສັດໂຄງການ ສາມາດນຳເອົາຊັບສິນຂອງຕົນ, ສິດຕາມສັນຍາ ແລະ ຜົນປະໂຫຍດ ໃນໂຄງການລົງ ທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໄປເປັນຫຼັກຊັບຄໍ້າປະກັນການກູ້ຢືມເງິນ ເພື່ອນຳມາພັດທະ ນາໂຄງການ ດັ່ງກ່າວໂດຍສອດຄ່ອງ ກັບເງື່ອນໄຂທີ່ລະບຸໄວ້ໃນ ສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ປະກາດໃຊ້ໃນແຕ່ລະໄລຍະ ແລະ ບົນພື້ນ ຖານການຕົກລົງເຫັນດີ ຂອງ ລັດຖະບານ.

ສິ່ງທີ່ສາມາດນຳເອົາໄປເປັນຫຼັກຊັບຄໍ້າປະກັນການກູ້ຢືມ ອາດລວມມີ ດັ່ງລຸ່ມນີ້ :

1. ສັງຫາລິມະຊັບ ຫຼື ອະສັງຫາລິມະຊັບ ທີ່ເປັນຊັບສິນຂອງ ບໍລິສັດໂຄງການ ຫຼື ໝາກຜົນຂອງ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;
2. ລາຍຮັບທີ່ຈະເກີດຂຶ້ນໃນອານາຄົດ ແລະ ລາຍຮັບຂອງ ບໍລິສັດໂຄງການ ທີ່ໄດ້ຮັບຈາກໂຄງການ ລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;
3. ສັນຍາຄໍ້າປະກັນອື່ນໆ ເຊັ່ນ: ການຈຳນຳຫຸ້ນ, ການຈຳນຳບັນຊີ.

**ມາດຕາ 44 ການຮັກສາຄວາມລັບ**

ເຈົ້າຂອງໂຄງການ, ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ, ຂະແໜງການທີ່ ກ່ຽວຂ້ອງອື່ນ ແລະ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕ້ອງຮັກສາຄວາມລັບ ແລະ ບໍ່ເປີດ ເຜີຍເນື້ອໃນ ຂອງບັນດາເອກະສານກ່ຽວກັບການປະມູນ, ໜັງສືສະແດງຄວາມສົນໃຈ, ບົດສະເໜີເຂົ້າຮ່ວມ ການແຂ່ງຂັນປະມູນ, ການປະເມີນ, ການປຶກສາຫາລື, ຈົດໝາຍພົວພັນ ຫຼື ການເຈລະຈາ ລະຫວ່າງພາກລັດ, ເຈົ້າຂອງໂຄງການ ກັບຜູ້ສົນໃຈປະມູນ ແລະ ຜູ້ເຂົ້າຮ່ວມແຂ່ງຂັນປະມູນ, ຍົກເວັ້ນຈົດໝາຍ ທີ່ໃຊ້ຕອບຄຳຖາມ ແລະ ປະກອບຄຳເຫັນຕໍ່ຊຸດເອກະສານປະມູນ. ເອກະສານດັ່ງກ່າວ ອາດສາມາດຖືກເປີດເຜີຍໄດ້ຖ້າມີການຮຽກ ຮ້ອງ ໂດຍກົດໝາຍ ຫຼື ມີຄຳສັ່ງຂອງສານ.

# ໝວດທີ 9
# ການຈັດຕັ້ງປະຕິບັດ, ສິດ ແລະ ໜ້າທີ່ ຂອງຜູ້ຈັດຕັ້ງປະຕິບັດ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ

**ມາດຕາ 45 ອົງການຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ອົງການຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ປະກອບມີ:

1. ເຈົ້າຂອງໂຄງການ;
2. ຄະນະກຳມະການປະມູນ;
3. ພາກເອກະຊົນ.

**ມາດຕາ 46 ສິດ ແລະ ໜ້າທີ່ ຂອງເຈົ້າຂອງໂຄງການ**

ເຈົ້າຂອງໂຄງການມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກຳນົດ ແລະ ສ້າງແຜນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເບື້ອງຕົ້ນ ໃຫ້ສຳເລັດ ກ່ອນວັນທີ 25 ຂອງເດືອນ ມິຖຸນາ ຂອງ ທຸກໆປີ ໂດຍສອດຄ່ອງ ກັບແຜນພັດທະນາເສດຖະກິດ-ສັງຄົມ ແລ້ວນຳສະເໜີຕໍ່ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອຄົ້ນຄວ້າ ແລະ ຂໍການພິຈາລະນາໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ຈະບັນຈຸເຂົ້າ ເປັນແຜນ ຫ້າປີ ແລະ ແຜນປະຈຳປີ ຈາກ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ;

2. ສະເໜີຂໍການສະໜັບສະໜູນ ທາງດ້ານ ວິຊາການ, ການເງິນ ແລະ/ຫຼື ທຶນສຳລັບການກະກຽມໂຄງການ ຈາກລັດຖະບານ ເພື່ອສ້າງບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຂອງໂຄງການ, ຖ້າໂຄງການໄດ້ຮັບການເຫັນດີດ້ານຫຼັກການ ຕ້ອງສະໜອງແຜນຄາດຄະເນລາຍຈ່າຍໃນການກະກຽມໂຄງການ ໃຫ້ສ້າງເປັນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ, ໂດຍຜ່ານ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ກ່ອນວັນທີ 25 ຂອງເດືອນ ມິຖຸນາ ຂອງ ທຸກໆປີ;

3. ປະສານສົມທົບກັບ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນການກະກຽມ ແລະ ດຳເນີນການປະມູນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕາມຂອບເຂດສິດ ໂດຍສອດຄ່ອງກັບດຳລັດສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງອື່ນ;

4. ວ່າຈ້າງ ບໍລິສັດທີ່ປຶກສາ ເພື່ອສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ, ສຶກສາຜົນກະທົບທາງດ້ານສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ ຂອງໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

5. ສະເໜີຂໍການແຕ່ງຕັ້ງ ຄະນະກຳມະການປະມູນ ໂຄງການທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຕໍ່ກະຊວງ ແຜນການ ແລະ ການລົງທຶນ, ເຈົ້າຂອງໂຄງການ ຕ້ອງສ້າງຕັ້ງ ຄະນະກຳມະການປະມູນ ດັ່ງທີ່ລະບຸໄວ້ໃນ ມາດຕາ 47 ຂອງດຳລັດສະບັບນີ້;

6. ແຕ່ງຕັ້ງຄະນະຮັບຜິດຊອບ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຊຶ່ງຫົວໜ້າຄະນະຕ້ອງມີຕຳແໜ່ງຂັ້ນຮອງກົມ (ຂັ້ນສູນກາງ) ຫຼື ຫົວໜ້າພະແນກ (ຂັ້ນແຂວງ) ຫຼື ທຽບເທົ່າ ຂຶ້ນໄປ;

7. ສ້າງລະບົບ ຄຸ້ມຄອງ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ສັນຍາໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ໄດ້ເຊັນແລ້ວ ຢ່າງມີປະສິດທິພາບ, ສອດຄ່ອງກັບຂອບໜ້າວຽກ ທີ່ຖືກຮັບຮອງແລ້ວ;

8. ເປັນເຈົ້າການໃນການຕິດຕາມ, ປະເມີນ, ສະຫຼຸບ ແລະ ລາຍງານ ຄວາມຄືບໜ້າ ແລະ ຜົນຂອງການຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃຫ້ແກ່ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ໂດຍຜ່ານ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

9. ສະເໜີຂໍໂຈະໂຄງການຊົ່ວຄາວ ຫຼື ຍົກເລີກໂຄງການຖາວອນ ຕໍ່ລັດຖະບານ ໂດຍຜ່ານ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແລະ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ໃນກໍລະນີມີການລະເມີດ ສັນຍາໂຄງການລົງທຶນ ແລະ ເຄື່ອນໄຫວຜິດກົດໝາຍ ແລະ ລະບຽບການ;

10. ນຳສະເໜີ ແຜນງົບປະມານຊຳລະໂຄງການ ຕໍ່ ຂະແໜງ ແຜນການ ແລະ ການລົງທຶນ ແລະ ຂະແໜງ ການເງິນ ໂດຍຜ່ານ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນກໍລະນີ ມີການສະໜັບສະໜູນທາງດ້ານການເງິນ ຂອງລັດຖະບານ, ແຜນງົບປະມານດັ່ງກ່າວ ຕ້ອງປະກອບມີຂໍ້ມູນ ດັ່ງນີ້:

- ຕາຕະລາງການຊຳລະເງິນໂດຍກົງ, ການຄ້ຳປະກັນ ຫຼື ພັນທະທາງດ້ານການເງິນອື່ນໆ ຂອງ ເຈົ້າຂອງໂຄງການ ຫຼື ລັດຖະບານ ຕະຫຼອດໄລຍະຂອງການຈັດຕັ້ງປະຕິບັດ ສັນຍາໂຄງການ;
- ກຳນົດ ແຜນລາຍຈ່າຍປະຈຳປີ ຂອງ ເຈົ້າຂອງໂຄງການ ເຂົ້າໃນແຜນງົບປະມານການຊຳລະ ໂດຍກົງ, ການຄ້ຳປະກັນ ຫຼື ພັນທະທາງດ້ານການເງິນອື່ນໆ ຕາມລຳດັບບູລິມະສິດ ເພື່ອນຳສະເໜີ ລັດຖະບານ.

ແຜນງົບປະມານຊຳລະໂຄງການ ຕ້ອງສອດຄ່ອງຕາມລະບຽບການຂອງຂະແໜງການເງິນ.

**ມາດຕາ 47 ສິດ ແລະ ໜ້າທີ່ ຂອງຄະນະກຳມະການປະມູນ**

ຄະນະກຳມະການປະມູນ ຖືກແຕ່ງຕັ້ງໂດຍ ລັດຖະມົນຕີ ກະຊວງ ແຜນການ ແລະ ການລົງທຶນ ຫຼື ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ໂດຍການປະສານສົມທົບ ຂະແໜງການທີ່ກ່ຽວຂ້ອງ. ຄະນະກຳມະການປະມູນ ປະກອບດ້ວຍຜູ້ຕາງໜ້າຈາກ ຂະແໜງການທີ່ເປັນເຈົ້າຂອງໂຄງການ ໜຶ່ງ ຫາ ສາມ ທ່ານ, ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແລະ ຂະແໜງການເງິນ ຢ່າງໜ້ອຍພາກສ່ວນລະ ໜຶ່ງ ທ່ານ, ໃນກໍລະນີຈຳເປັນ ກໍສາມາດສະເໜີຂໍການແຕ່ງຕັ້ງຜູ້ຕາງໜ້າ ຈາກຂະແໜງການກ່ຽວຂ້ອງອື່ນ ຂະແໜງລະ ໜຶ່ງ ທ່ານ.

ຄະນະກຳມະການປະມູນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກະກຽມເອກະສານການປະມູນ, ປະເມີນໜັງສືແຈ້ງເຈດຈຳນົງ ແລະ ຂໍ້ສະເໜີ ແລ້ວສະເໜີຂໍການພິຈາລະນາຮັບຮອງຜົນຂອງການປະເມີນດັ່ງກ່າວ ຈາກ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ໂດຍຜ່ານ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

2. ເກັບຮັກສາຂໍ້ມູນກ່ຽວກັບຂະບວນການ ແລະ ເອກະສານປະມູນ ລວມທັງບົດລາຍງານ ການປະເມີນ ຜົນຂອງແຕ່ລະໂຄງການໄວ້ໃນສະຖານທີ່ມີຄວາມປອດໄພ ແລະ ຮັບປະກັນ. ເອກະສານເຫຼົ່ານີ້ຕ້ອງຮັກສາໄວ້ຢ່າງໜ້ອຍ ຕະຫຼອດໄລຍະອາຍຸສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

3. ສະໜອງເອກະສານການປະມູນໃຫ້ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ , ຂະແໜງການເງິນ, ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແລະ ຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ໃນກໍລະນີມີການຮຽກຮ້ອງເອົາເອກະສານດັ່ງກ່າວ;

4. ລາຍງານຜົນຂອງການປະມູນຕໍ່ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ເພື່ອໃຫ້ ຫ້ອງການ ລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ລົງເຜີຍແຜ່ໂດຍຜ່ານສື່ມວນຊົນ ພາຍໃນ ສາມ ວັນ ລັດຖະການ.

**ມາດຕາ 48 ສິດ ແລະ ໜ້າທີ່ ຂອງພາກເອກະຊົນ**

ພາກເອກະຊົນມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຂົ້າຮ່ວມໃນການພັດທະນາໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ພາຍໃຕ້ ສັນຍາລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍສອດຄ່ອງກັບດຳລັດສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ;

2. ເຂົ້າຮ່ວມຂະບວນການປະມູນ ແລະ ການຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຖ້າຫາກວ່າພາກເອກະຊົນດັ່ງກ່າວ ນອນຢູ່ໃນເງື່ອນໄຂ ທີ່ກຳນົດໄວ້ໃນດຳລັດສະບັບນີ້;

3. ສ້າງຕັ້ງ ບໍລິສັດໂຄງການ ໂດຍສອດຄ່ອງກັບ ດຳລັດສະບັບນີ້ ແລະ ກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ ພາຍໃນ ສິບຫ້າ ວັນລັດຖະການ ພາຍຫຼັງໄດ້ຮັບແຈ້ງການເຫັນດີ ຂອງລັດຖະບານ ໃຫ້ເຊັນ ສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

4. ເປີດບັນຊີຢູ່ທະນາຄານທຸລະກິດ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວຢູ່ ສປປ ລາວ, ນຳເຂົ້າ ແລະ ສົ່ງອອກທຶນ ໂດຍສອດຄ່ອງກັບກົດໝາຍຂອງທະນາຄານແຫ່ງ ສປປ ລາວ;

5. ປະກອບທຶນເຂົ້າໃນການພັດທະນາໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍ ສອດຄ່ອງກັບ ເງື່ອນໄຂທີ່ລະບຸໄວ້ໃນ ຊຸດເອກະສານປະມູນ ແລະ ສັນຍາລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

6. ຈັດຕັ້ງປະຕິບັດ ແລະ ຄຸ້ມຄອງບໍລິຫານໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນໃຫ້ມີປະສິດທິພາບ ແລະ ປະສິດທິຜົນຕາມທີ່ກຳນົດໄວ້ໃນ ຊຸດເອກະສານປະມູນ ແລະ ສັນຍາ ທີ່ໄດ້ເຊັນຮ່ວມກັບລັດຖະບານ;

7. ຕິດຕາມ, ປະເມີນ, ສະຫຼຸບ ແລະ ລາຍງານຄວາມຄືບໜ້າ ແລະ ຜົນຂອງການຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕໍ່ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ໂດຍຜ່ານ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ , ຕໍ່ເຈົ້າຂອງໂຄງການ ແລະ ຕໍ່ຂະແໜງການທີ່ກ່ຽວຂ້ອງເປັນ ໄຕມາດ, ເຄິ່ງປີ ແລະ ປະຈຳປີ;

8. ສ້າງກົນໄກທີ່ງ່າຍດາຍ ແລະ ມີປະສິດທິພາບເພື່ອຕິດຕາມ ແລະ ແກ້ໄຂຄຳຮ້ອງ-ຄຳສະເໜີ ຂອງຜູ້ຊົມໃຊ້ໂຄງລ່າງພື້ນຖານ ແລະ ການບໍລິການ;

9. ຕ້ອງປະຕິບັດ ຂໍ້ຫ້າມຕາມທີ່ກຳນົດໄວ້ໃນ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ສັນຍາລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແລະ ກົດໝາຍທີ່ກ່ຽວຂ້ອງອື່ນ;

10. ປະຕິບັດບັນດາສິດ ແລະ ພັນທະອື່ນໆ ຕາມທີ່ກຳນົດໄວ້ໃນດຳລັດສະບັບນີ້, ສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງອື່ນ.

ນອກຈາກທີ່ໄດ້ກຳນົດໄວ້ໃນມາດຕານີ້ ຄວາມຮັບຜິດຊອບສະເພາະ ຂອງພາກເອກະຊົນ ຈະຖືກລະບຸໄວ້ໃນແຕ່ລະສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ.

## ໝວດທີ 10
## ການສະໜັບສະໜູນຂອງລັດຖະບານ

**ມາດຕາ 49 ການສະໜັບສະໜູນຂອງລັດຖະບານ**

ການສະໜັບສະໜູນ ຂອງລັດຖະບານ ມີ ສາມ ຮູບແບບ ດັ່ງນີ້:

1. ການສະໜັບສະໜູນ ທາງດ້ານນິຕິກຳ;

2. ການສະໜັບສະໜູນ ທາງດ້ານການເງິນ;

3. ການສະໜັບສະໜູນ ທາງດ້ານນະໂຍບາຍສົ່ງເສີມ.

**ມາດຕາ 50 ການສະໜັບສະໜູນ ທາງດ້ານນິຕິກຳ**

ການສະໜັບສະໜູນທາງດ້ານນິຕິກຳ ແມ່ນລັດຖະບານຮັບປະກັນທາງດ້ານກົດໝາຍ ແລະ ລະບຽບການ ເພື່ອອຳນວຍຄວາມສະດວກ ແລະ ຮັບປະກັນການດຳເນີນງານຂອງໂຄງການລົງທຶນ ໂດຍມີການປັບປຸງ ຫຼື ສ້າງ ນິຕິກຳເພີ່ມເຕີມ ຖ້າເຫັນວ່າມີຄວາມຈຳເປັນ ເພື່ອສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃຫ້ມີປະສິດທິພາບ. ການປັບປຸງ ຫຼື ການສ້າງນິຕິກຳເພີ່ມເຕີມດັ່ງກ່າວ ຈະຕ້ອງບໍ່ຂັດກັບ ນິຕິກຳອື່ນທີ່ມີແລ້ວ, ຮັບປະກັນ ການປະຕິບັດສິດ ແລະ ພັນທະຂອງບັນດາຜູ້ຮ່ວມລົງທຶນ ແລະ ນຳຜົນປະໂຫຍດມາໃຫ້ແກ່ສັງຄົມ.

**ມາດຕາ 51 ການສະໜັບສະໜູນທາງດ້ານການເງິນ**

ການສະໜັບສະໜູນທາງດ້ານການເງິນ ແມ່ນການຈັດສັນແຫຼ່ງທຶນຂອງລັດຖະບານ ເພື່ອປະກອບເປັນ ກອງທຶນພັດທະນາໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ໄດ້ມາຈາກ: ລາຍຮັບ ງົບປະມານແຫ່ງລັດ ແລະ/ຫຼື ທຶນອື່ນໃນແຜນງົບປະມານໄລຍະສັ້ນ ແລະ ໄລຍະຍາວ , ທຶນຊ່ວຍເຫຼືອທາງການ ເພື່ອການພັດທະນາ, ການຊ່ວຍເຫຼືອຂອງອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ, ການປະກອບສ່ວນ ຂອງພາກທຸລະກິດ, ຄ່າປັບໃໝ, ຄ່າທົດແທນຄວາມເສຍຫາຍຕໍ່ໂຄງການ, ດອກເບ້ຍ ແລະ ຜົນກຳໄລ ທີ່ເກີດ ຂຶ້ນຈາກການລົງທຶນ ໂດຍນຳໃຊ້ກອງທຶນພັດທະນາໂຄງການ. ລວມທັງເງິນທຶນ ທີ່ເກັບຄືນຈາກການປະມູນ ແຕ່ລະຄັ້ງ ເພື່ອຖອກເຂົ້າກອງທຶນ ເພື່ອນຳໃຊ້ໃນໂຄງການຕໍ່ໄປໃຫ້ມີຄວາມຍືນຍົງ, ຊຶ່ງກອງທຶນພັດທະນາ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແມ່ນ ຢູ່ພາຍໃຕ້ການຄຸ້ມຄອງໂດຍກົງຂອງ ລັດຖະບານ.

ກອງທຶນພັດທະນາໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເປັນກອງທຶນໝູນ ວຽນ ນຳໃຊ້ເຂົ້າໃນການພັດທະນາໂຄງການ ເລີ່ມແຕ່ຂັ້ນຕອນລິເລີ່ມ ຈົນສິ້ນສຸດໂຄງການ ເຊັ່ນ: ການສຶກສາ-ສຳຫຼວດ, ການຂຽນບົດວິພາກເສດຖະກິດ-ເຕັກນິກ , ບົດປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ-ສັງຄົມ ແລະ ທຳມະຊາດ, ການກະກຽມ ແລະ ການດຳເນີນຂັ້ນຕອນການປະມູນ ລວມທັງການວ່າຈ້າງທີ່ປຶກສາ ແລະ ການຕິດຕາມ ກວດກາ ການຈັດຕັ້ງປະຕິບັດໂຄງການ.

ໃນບາງກໍລະນີ ທຶນສຳລັບການກະກຽມໂຄງການ ສາມາດນຳໃຊ້ທຶນ ຈາກພາກເອກະຊົນກ່ອນ ແລ້ວຊົດ ເຊີຍຄືນ ໂດຍຫັກຄືນຈາກມູນຄ່າປະມູນ ຫຼື ໃນຮູບແບບອື່ນ.

ລັດຖະບານ ສະຫງວນສິດໃນການຄັດເລືອກ ການໃຫ້ການສະໜັບສະໜູນດ້ານການເງິນ ເພື່ອການຊຳ ລະສະສາງຕະຫຼອດໄລຍະ ຫຼື ຊ່ວງໃດໜຶ່ງຂອງອາຍຸໂຄງການ ບົນພື້ນຖານ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໄດ້ຜ່ານການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລ້ວ ເຫັນ ວ່າຈຳເປັນຕ້ອງມີການສະໜັບສະໜູນດ້ານການເງິນ ຈາກລັດຖະບານ ເພື່ອໃຫ້ເກີດຜົນປະໂຫຍດແກ່ສັງຄົມ ຫຼື ມີຜົນກະທົບທາງກົງ ຫຼື ທາງອ້ອມ ຕໍ່ການພັດທະນາຂອງຂະແໜງການເສດຖະກິດອື່ນ. ລັດຖະບານ ໄດ້ ຮັບຮອງເອົາຜົນຂອງການສຶກສາດັ່ງກ່າວແລ້ວ, ລັດຖະບານ ຮັບປະກັນຂຶ້ນແຜນງົບປະມານໃຫ້ພຽງພໍ ສຳລັບ ການຊຳລະສະສາງຂອງເຈົ້າຂອງໂຄງການ ຕາມສັນຍາໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກ ເອກະຊົນ.

ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກອງທຶນພັດທະນາໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 52 ການສະໜັບສະໜູນ ທາງດ້ານນະໂຍບາຍສົ່ງເສີມ**

ການສະໜັບສະໜູນທາງດ້ານນະໂຍບາຍສົ່ງເສີມ ແມ່ນການສະໜັບສະໜູນຂອງລັດຖະບານ ດ້ວຍການກຳນົດຂອບນະໂຍບາຍດ້ານການເງິນ ເຊັ່ນ: ການຖືມຮຸ້ນ , ການຄໍ້າປະກັນ, ການຮັບປະກັນ ຜົນການຈັດຕັ້ງປະຕິບັດວຽກງານ, ເງິນກູ້ໄລຍະຍາວ , ການຜ່ອນຜັນດ້ານພາສີ -ອາກອນ ແລະ ການປະກອບສ່ວນ ເປັນວັດຖຸ ລວມທັງ ການສະໜັບສະໜູນໃນຮູບແບບການສະໜອງທຶນ ເພື່ອ ຮັບປະກັນປະສິດທິຜົນທາງດ້ານເສດຖະກິດຂອງໂຄງການ. ການພິຈາລະນາການໃຫ້ນະໂຍບາຍສົ່ງເສີມ ແຕ່ລະໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ມີຄວາມແຕກຕ່າງກັນໄປ ໂດຍອີງຕາມຜົນຂອງການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການກ່ຽວຂ້ອງ.

ການສະໜັບສະໜູນທາງດ້ານນະໂຍບາຍສົ່ງເສີມ ທີ່ບໍ່ນອນໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຕ້ອງສະເໜີຂໍການພິຈາລະນາ ຈາກສະພາແຫ່ງຊາດ.

**ມາດຕາ 53 ການສົ່ງເສີມວິສາຫະກິດ, ຜະລິດຕະພັນ ແລະ ການບໍລິການພາຍໃນ**

ວິສາຫະກິດ ທີ່ສ້າງຕັ້ງຂຶ້ນ ແລະ ຈົດທະບຽນພາຍໃຕ້ກົດໝາຍ ສປປ ລາວ ບໍ່ແມ່ນເຄືອຄ່າຍຂອງວິສາຫະກິດຕ່າງປະເທດ ທີ່ມີຄວາມເທົ່າທຽມ ກັບວິສາຫະກິດຕ່າງປະເທດ ສາມາດເຂົ້າຮ່ວມການແຂ່ງຂັນ ການປະມູນ ຊຶ່ງໄດ້ກຳນົດໄວ້ໃນ ຊຸດເອກະສານປະມູນ.

ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕ້ອງສົ່ງເສີມການນຳໃຊ້ຜະລິດຕະພັນ ແລະ ການສະໜອງການບໍລິການ ທີ່ສາມາດສະໜອງໄດ້ຢູ່ພາຍໃນປະເທດ ບົນພື້ນຖານຜະລິດຕະພັນ, ການບໍລິການດັ່ງກ່າວ ມີຄຸນນະພາບ ແລະ ລາຄາທຽບເທົ່າ ຫຼື ດີກວ່າຜະລິດຕະພັນ ທີ່ນຳເຂົ້າຈາກຕ່າງປະເທດ.

ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ນຳໃຊ້ທຶນພາຍໃນທັງໝົດ ແມ່ນສະຫງວນເປັນບູລິມະສິດ ໃຫ້ແກ່ບັນດາວິສາຫະກິດພາຍໃນ ທີ່ໄດ້ເງື່ອນໄຂ, ບູລິມະສິດດັ່ງກ່າວຕ້ອງກຳນົດໄວ້ໃນຊຸດເອກະສານປະມູນ.

## ໝວດທີ 11
## ຂໍ້ຫ້າມ

**ມາດຕາ 54 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດໃຫ້ແກ່ສ່ວນຕົວ, ພັກພວກ, ຄອບຄົວ ແລະ ຍາດພີ່ນ້ອງ ຊຶ່ງຈະສ້າງຜົນເສຍຫາຍໃຫ້ແກ່ລັດ ແລະ ລວມໝູ່;

2. ພົວພັນທຸກຮູບແບບ, ເຂົ້າຮ່ວມ ແລະ ໃຫ້ການຊ່ວຍເຫຼືອ ແກ່ ຜູ້ເຂົ້າຮ່ວມປະມູນ, ສື່ກາງ ຫຼື ນາຍໜ້າ, ໃຫ້ສິນບົນ ແກ່ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

3. ສໍ້ລາດບັງຫຼວງ, ຫຼອກລວງສໍ້ໂກງ, ສົມຮູ້ຮ່ວມຄິດ ທີ່ພາໃຫ້ມີຜົນກະທົບທາງລົບ ຕໍ່ການປະມູນ, ຂັດກັບດຳລັດສະບັບນີ້, ກົດໝາຍ ແລະ ລະບຽບການ;

4. ປອມແປງເອກະສານ ຫຼື ຕາປະທັບ ກ່ຽວກັບວຽກງານຈັດຊື້ - ຈັດຈ້າງ;

5. ປິດບັງກົດໜ່ວງຖ່ວງດຶງ, ຊຸກເຊື່ອງ ຫຼື ຂັດຂວາງ ການຈັດຕັ້ງປະຕິບັດວຽກງານ ຂອງເຈົ້າໜ້າທີ່ທີ່ກ່ຽວຂ້ອງ;

6. ເປີດ ຫຼື ນຳໃຊ້ ບັນຊີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ;

7. ເປັນທີ່ປຶກສາໃນການກະກຽມ ແລະ ອອກແບບ ຫຼື ການກຳນົດມາດຕະຖານເຕັກນິກຂອງສິນຄ້າ ແລະ ການບໍລິການ ຊຶ່ງເປັນປັດໄຈພື້ນຖານຂອງການຈັດຊື້ - ຈັດຈ້າງ ທີ່ສ້າງຜົນປະໂຫຍດຊໍ້າຊ້ອນ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ ຊຶ່ງຈະສ້າງຜົນເສຍຫາຍໃຫ້ແກ່ ລັດ ແລະ ລວມໝູ່.

**ມາດຕາ 55 ຂໍ້ຫ້າມ ສຳລັບ ເຈົ້າຂອງໂຄງການ**

ຫ້າມ ເຈົ້າຂອງໂຄງການ ມີພຶດຕິກຳ ດັ່ງນີ້:

1. ຕົກລົງຮັບຮອງເອົາ ການລົງທຶນ ແນວຄວາມຄິດລິເລີ່ມ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍບໍ່ຜ່ານຂັ້ນຕອນການພິຈາລະນາຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ແລະ ກົດໝາຍ ທີ່ກ່ຽຂ້ອງ;

2. ກົດໜ່ວງ, ແກ່ຍາວຂັ້ນຕອນການປະຕິບັດໂຄງການຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ແລະ ກົດໝາຍທີ່ກ່ຽວຂ້ອງ;

3. ອວ່າຍທຶນ ຈາກໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ຖືກຮັບຮອງແລ້ວ ໄປໃສ່ການລົງທຶນ ແນວຄວາມຄິດລິເລີ່ມ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົ ນ ໃນກໍລະນີທີ່ມີການສະໜັບສະໜູນດ້ານການເງິນ ຂອງ ລັດຖະບານ;

4. ປ່ຽນແປງໂຄງສ້າງ ແລະ/ຫຼື ເພີ່ມບໍລິມາດວຽກ ຂອງໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ຖືກຮັບຮອງແລ້ວ ຢ່າງພາລະການ ໂດຍບໍ່ໄດ້ຮັບການເຫັນດີ ຈາກລັດຖະບານ ຫຼື ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ;

5. ອະນຸຍາດໃຫ້ ທີ່ປຶກສາ ແລະ ຜູ້ຮັບເໝົາໂຄງການ, ດັດແປງບັນດາມາດຕະຖານເຕັກນິກໂຄງການ ໂດຍບໍ່ໄດ້ຮັບການເຫັນດີ ຈາກພາກສ່ວນທີ່ກ່ຽວຂ້ອງ ແລະ ຈາກລັດຖະບານ ຫຼື ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ;

6. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງໂຄງການ ຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ບໍ່ມີສ່ວນກ່ຽວຂ້ອງ;

7. ສໍ້ລາດບັງຫຼວງ, ຫຼອກລວງສໍ້ໂກງ, ສົມຮູ້ຮ່ວມຄິດ, ຮັບ ຫຼື ໃຫ້ສິນບົນ, ຂໍເອົາ, ທວງເອົາ ໃນຂະບວນການປະມູນ ແລະ ແກ້ໄຂບັນຫາໂດຍບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ ເພື່ອຫາຜົນປະໂຫຍດສ່ວນຕົວ;

8. ມີພຶດຕິກຳອື່ນໆ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ ຊຶ່ງຈະສ້າງຜົນເສຍຫາຍໃຫ້ແກ່ ລັດ ແລະ ລວມໝູ່.

**ມາດຕາ 56 ຂໍ້ຫ້າມ ສຳລັບ ຄະນະກຳມະການປະມູນ**

ຫ້າມ ຄະນະກຳມະການປະມູນ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່ ແລະ ຕຳແໜ່ງ ບັງຄັບນາບຂູ່ຜູ້ເຂົ້າຮ່ວມປະມູນ ເພື່ອຫາຜົນປະໂຫຍດສ່ວນຕົວ, ພັກພວກ, ຄອບຄົວ ແລະ ຍາດພີ່ນ້ອງ, ຊຶ່ງຈະສ້າງຄວາມເສຍຫາຍໃຫ້ແກ່ ລັດ ແລະ ລວມໝູ່;

2. ມີພຶດຕິກຳສໍ້ລາດບັງຫຼວງ, ຫຼອກລວງສໍ້ໂກງ ແລະ ສົມຮູ້ຮ່ວມຄິດໃນຂະບວນການປະມູນ, ຂໍເອົາ, ທວງເອົາ ຫຼື ຮັບສິນບົນ;

3. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບ ໂດຍບໍ່ໄດ້ຮັບອະນຸຍາດ;

4. ເມີນເສີຍຕໍ່ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນ ຫຼື ກົດໜ່ວງຖ່ວງດຶງເອກະສານ;

5. ປະຕິບັດໜ້າທີ່ເກີນຂອບເຂດສິດຂອງຕົນ;

6. ມີພຶດຕິກຳ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ ຊຶ່ງຈະສ້າງຜົນເສຍຫາຍໃຫ້ແກ່ລັດ ແລະ ລວມໝູ່.

**ມາດຕາ 57 ຂໍ້ຫ້າມ ສຳລັບ ທີ່ປຶກສາໂຄງການ**

ຫ້າມ ທີ່ປຶກສາໂຄງການ ມີພຶດຕິກຳ ດັ່ງນີ້:

1. ໃຫ້ຄຳປຶກສາທີ່ຂາດຄວາມຮັບຜິດຊອບ, ບິດເບືອນ , ບໍ່ຖືກຕ້ອງຕາມຄວາມຈິງ, ຫຼົບຫຼີກການໃຫ້ຄຳປຶກສາ ຫຼື ຄຳແນະນຳທາງດ້ານວິຊາການທີ່ດີ ກ່ຽວກັບໂຄງການລົງທຶນໃຫ້ແກ່ ເຈົ້າຂອງໂຄງການ ພາກລັດ ແລະ ພາກເອກະຊົນ;

2. ສະໜອງຂໍ້ມູນທາງດ້ານການເງິນ ແລະ ເຕັກນິກ ທີ່ບໍ່ຖືກຕ້ອງກັບຄວາມເປັນຈິງ;

3. ເມີນເສີຍ ຕໍ່ການປະຕິບັດໜ້າທີ່ຕາມສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ, ດັດແປງບັນດາມາດຕະຖານເຕັກນິກ , ການເພີ່ມ ຫຼື ຫຼຸດ ບໍລິມາດວຽກຂອງໂຄງການ ໂດຍບໍ່ໄດ້ຮັບອະນຸຍາດ ຈາກເຈົ້າຂອງໂຄງການ ແລະ ລັດຖະບານ ຫຼື ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ;

4. ສົມຮູ້ຮ່ວມຄິດກັບ ເຈົ້າຂອງໂຄງການ ຫຼື ຄະນະຮັບຜິດຊອບການປະມູນ ຫຼື ພາກເອກະຊົນ ເພື່ອຫາຜົນປະໂຫຍດໃຫ້ຕົນເອງແບບບໍ່ຊອບທຳ ແລະ ຜິດກົດໝາຍ;

5. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງໂຄງການ ຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ບໍ່ມີສ່ວນກ່ຽວຂ້ອງ;

6. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ ຊຶ່ງຈະສ້າງຜົນເສຍຫາຍໃຫ້ແກ່ລັດ ແລະ ລວມໝູ່.

**ມາດຕາ 58 ຂໍ້ຫ້າມ ສຳລັບ ພາກເອກະຊົນ, ຜູ້ເຂົ້າຮ່ວມປະມູນ ແລະ ຜູ້ຊະນະປະມູນ**

ຫ້າມ ພາກເອກະຊົນ ຜູ້ເຂົ້າຮ່ວມປະມູນ ແລະ ຜູ້ຊະນະປະມູນ ມີພຶດຕິກຳ ດັ່ງນີ້:

1. ສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່, ໃຫ້ສິນບົນແກ່ເຈົ້າໜ້າທີ່, ພະນັກງານ ແລະ ທີ່ປຶກສາໂຄງການ ທີ່ຮັບຜິດຊອບໂດຍກົງ ຫຼື ກ່ຽວຂ້ອງກັບ ວຽກງານລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍກົງ ຫຼື ທາງອ້ອມ ເພື່ອໃຫ້ໄດ້ມາເຊິ່ງ ຜົນປະໂຫຍດທີ່ຂັດກັບກົດໝາຍ ແລະ ລະບຽບການ;

2. ເມີນເສີຍຕໍ່ການຄຸ້ມຄອງການປະຕິບັດໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕາມສັນຍາ ແລະ ກົດໝາຍ;

3. ດັດແປງບັນດາມາດຕະຖານເຕັກນິກ, ເພີ່ມ ຫຼື ຫຼຸດ ບໍລິມາດວຽກຂອງໂຄງການ ໂດຍບໍ່ໄດ້ຮັບອະນຸຍາດ ຈາກເຈົ້າຂອງໂຄງການ ແລະ ຜ່ານການເຫັນດີ ຈາກລັດຖະບານ ຫຼື ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ;

4. ຫຼົບຫຼີກ ການປະຕິບັດພັນທະ, ເຊື່ອງອຳລາຍໄດ້, ຜົນກຳໄລລວມ ທັງຕົວເລກການເສຍພາສີ-ອາກອນ;

5. ເຮັດໃຫ້ເຈົ້າຂອງໂຄງການ ຫຼື ຜູ້ຈັດຊື້ - ຈັດຈ້າງ ມີຄວາມເຂົ້າໃຈຜິດ ຕໍ່ ຄຸນລັກສະນະ ແລະ ຄຸນນະພາບ, ຮູບແບບ ແລະ ສັນຍາລັກອື່ນ ເຊັ່ນ: ເຄື່ອງໝາຍການຄ້າ, ຍີ່ຫໍ້ຂອງສິນຄ້າ;

6. ຂາຍໂຄງການ ທີ່ຕົນປະມູນໄດ້ ໃຫ້ ບຸກຄົນ ຫຼື ນິຕິບຸກຄົນອື່ນ ໂດຍບໍ່ໄດ້ຮັບອະນຸຍາດ ຈາກ ລັດຖະບານ;

7. ໂອນ ຫຼື ມອບສິດ, ພັນທະ ແລະ ຜົນປະໂຫຍດສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ຂອງ ສັນຍາໃຫ້ ບຸກຄົນ ຫຼື ນິຕິບຸກຄົນທີ່ສາມ ໂດຍບໍ່ໄດ້ຮັບການເຫັນດີເປັນລາຍລັກອັກສອນຈາກ ລັດຖະບານ , ນອກຈາກວ່າ ໄດ້ກຳນົດໄວ້ເປັນຢ່າງອື່ນ;

8. ໂຄສະນາທຸກຮູບແບບ ເພື່ອເປັນການຊຸກຍູ້ສົ່ງເສີມ ການກໍ່ສ້າງ ແລະ /ຫຼື ການສ້ອມແປງ, ການສະ ໜອງສິນຄ້າ ແລະ/ຫຼື ການບໍລິການວຽກງານ ແລະ ການບໍລິການທີ່ປຶກສາ ທີ່ເປັນການລະເມີດກົດໝາຍ;

9. ແອບອ້າງຜົນງານ ຫຼື ຊື່ສຽງຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ;

10. ໃສ່ຮ້າຍປ້າຍສີ ຫຼື ໂຄສະນາທັບຖົມການຈັດຕັ້ງ ແລະ ພະນັກງານຂອງລັດ;

11. ກະທຳ ຫຼື ເຄື່ອນໄຫວໃດໆ ທີ່ມີຜົນກະທົບຕໍ່ຮີດຄອງປະເພນີ ແລະ ວັດທະນະທຳຂອງຊາດ, ຄວາມສະຫງົບຂອງສັງຄົມ ແລະ ຂອງຊາດ;

12. ມີພຶດຕິກຳອື່ນທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ ຊຶ່ງຈະສ້າງຜົນເສຍຫາຍໃຫ້ແກ່ ລັດ ແລະ ລວມໝູ່ .

## ໝວດທີ 12
## ການກວດກາ ແລະ ການປະເມີນຜົນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ

### ມາດຕາ 59 ຄວາມຮັບຜິດຊອບລວມໃນການ ຕິດຕາມກວດກາ ແລະ ການປະເມີນຜົນໂຄງການ

ບັນດາຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງທັງໝົດ ຕ້ອງຮັບຜິດຊອບ ຕິດຕາມ, ກວດກາ ແລະ ປະເມີນຜົນ ຂັ້ນຕອນການກະກຽມໂຄງການ, ການປະມູນ, ການນຳໃຊ້ທຶນຂອງໂຄງການ, ການຈັດຕັ້ງປະຕິ ບັດສັນຍາ ໃນແຕ່ລະຂັ້ນຕອນເຊັ່ນ: ໄລຍະກໍ່ສ້າງ, ດຳເນີນງານ, ບຳລຸງຮັກສາ ແລະ ມອບຮັບໂຄງການ ຕາມ ພາລະບົດບາດ ເພື່ອໃຫ້ການຈັດຕັ້ງປະຕິບັດ ສັນຍາ ແລະ ໂຄງການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກ ເອກະຊົນ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ, ຜົນໄດ້ຮັບຈາກການຈັດຕັ້ງປະຕິບັດເປົ້າໝາຍ ແລະ ລະດັບຄາດ ໝາຍຂອງໂຄງການ ຕ້ອງສາມາດວັດແທກໄດ້ ໂດຍຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕ້ອງມີກົນໄກ ຕິດຕາມ ກວດກາ ແລະ ປະເມີນຜົນ ຢ່າງເປັນປົກກະຕິ.

ການກວດກາ ການຈັດຕັ້ງປະຕິບັດ ສັນຍາ ແລະ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກ ເອກະຊົນ ມີ 3 ຮູບການ ດັ່ງນີ້:

- ການກວດກາ ຕາມແຜນການປົກກະຕິ: ແມ່ນການກວດກາທີ່ມີລັກສະນະເປັນປະຈຳ ແລະ ມີກຳ ນົດເວລາອັນແນ່ນອນ;
- ການກວດກາ ນອກແຜນການ ໂດຍມີການແຈ້ງໃຫ້ຊາບລ່ວງໜ້າ: ແມ່ນການກວດການອກແຜນ ການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;
- ການກວດກາ ແບບກະທັນຫັນ: ແມ່ນການກວດກາເມື່ອເຫັນວ່າມີຄວາມຈຳເປັນ ແລະ ຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

**ມາດຕາ 60 ຄວາມຮັບຜິດຊອບຂອງ ຫ້ອງການການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ດັ່ງນີ້:

1. ເປັນໃຈກາງ ໂດຍສົມທົບກັບຂະແໜງການກ່ຽວຂ້ອງ ຕິດຕາມ ກວດກາຜົນສຳເລັດ ຂອງການຈັດຕັ້ງປະຕິບັດຕົວຊີ້ວັດ ຕາມມາດຖານ ແລະ ເງື່ອນໄຂ ເພື່ອບັນລຸເປົ້າໝາຍຂອງໂຄງການ ທີ່ກຳນົດໄວ້ໃນສັນຍາລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

2. ປະສານກັບ ເຈົ້າຂອງໂຄງການ ແລະ ຜູ້ກວດກາເອກະລາດ ໃນການທົບທວນຄືນ ກ່ຽວກັບການກວດກາ ແລະ ຮັບປະກັນຄຸນນະພາບ;

3. ປະສານງານ ກັບ ບໍລິສັດໂຄງການ ແລະ ເຈົ້າຂອງໂຄງການ ໃນການຕິດຕາມ ກວດກາ ແລະ ປະເມີນຜົນ ໂຄງການຢ່າງມີປະສິດທິພາບ ແລະ ເປັນປົກກະຕິ;

4. ລາຍງານສະພາບ ແລະ ຄວາມຄືບໜ້າຂອງບັນດາໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ກຳລັງຈັດຕັ້ງປະຕິບັດໃນປະຈຸບັນ ແລະ ອາດເກີດຂຶ້ນໃນອະນາຄົດໃຫ້ແກ່ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ເປັນປະຈຳໄຕມາດ ແລະ ປະຈຳປີ;

5. ລາຍງານຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດສັນຍາ ແລະ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງ ແລະ ພາກສ່ວນອື່ນໆ ທີ່ມີສ່ວນຮ່ວມໃນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຮັບຊາບເປັນແຕ່ລະໄລຍະ;

ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ປະສານສົມທົບ ກັບເຈົ້າຂອງໂຄງການ ແລະ ຂະແໜງການທີ່ກ່ຽວຂ້ອງ ຕ້ອງດຳເນີນການຕິດຕາມ, ກວດກາ ແລະ ປະເມີນຜົນ ຂອງວຽກງານລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນແຕ່ລະໄລຍະ ດັ່ງນີ້:

- ໄລຍະກຳນົດ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເຂົ້າໃນແຜນ, ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ພາຍໃຕ້ການຊີ້ນຳຂອງ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕ້ອງຮັບປະກັນ ການຄັດເລືອກໂຄງການ ໃຫ້ມີຄວາມເໝາະສົມ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ຫ້າ ປີ ແຕ່ລະໄລຍະ;

- ໄລຍະກະກຽມການປະມູນ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ, ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕ້ອງທົບທວນຄືນ ແລະ ກວດກາຄຸນນະພາບຂອງຊຸດເອກະສານປະມູນ ທີ່ເຈົ້າຂອງໂຄງການເປັນຜູ້ກະກຽມກ່ອນການປະກາດສູ່ສັງຄົມໂດຍຜ່ານສື່ມວນຊົນ;

- ໄລຍະຈັດຕັ້ງປະຕິບັດ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ, ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ກວດກາການຈັດຕັ້ງປະຕິບັດໂຄງການຂອງ ເຈົ້າຂອງໂຄງການ ຮັບປະກັນວ່າໜ້າວຽກທັງໝົດ ທີ່ຖືກຈັດຕັ້ງປະຕິບັດ ໂດຍເຈົ້າຂອງໂຄງການ ແລະ ບໍລິສັດໂຄງການຢູ່ໃນກຳນົດເວລາ ແລະ ສອດຄ່ອງກັບມາດຕະຖານທີ່ກຳນົດໄວ້ໃນສັນຍາ;

- ໄລຍະການ ມອບ - ໂອນ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ, ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕ້ອງສົມທົບ ກັບເຈົ້າຂອງໂຄງການ ແລະ ຂະແໜງການກ່ຽວຂ້ອງ ກວດກາໂຄງການ ກ່ອນການມອບຮັບ ຕາມມາດຕະຖານ ແລະ ຄຸນນະພາບທີ່ກຳນົດໄວ້ໃນສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ.

**ມາດຕາ 61 ຄວາມຮັບຜິດຊອບຂອງ ເຈົ້າຂອງໂຄງການ**

ເຈົ້າຂອງໂຄງການ ປະສານສົມທົບ ກັບ ຂະແໜງການທີ່ກ່ຽວຂ້ອງ ຕ້ອງດຳເນີນການ ຕິດຕາມ ກວດກາ ແລະ ປະເມີນຜົນ ຂອງວຽກງານລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນແຕ່ລະໄລຍະ ດັ່ງນີ້:

- ໄລຍະກະກຽມ, ຈັດຕັ້ງປະຕິບັດການປະມູນ ແລະ ການເຮັດສັນຍາ , ຕ້ອງດຳເນີນການກວດກາ ການຈັດຕັ້ງປະຕິບັດວຽກງານຂອງຕົນ ຢ່າງເປັນປະຈຳ ເພື່ອຮັບປະກັນ ການຈັດຕັ້ງປະຕິບັດໂຄງການດຳເນີນໄປ ຕາມແຜນ ແລະ ຄຸນນະພາບຂອງ ສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

- ໃນໄລຍະຈັດຕັ້ງປະຕິບັດໂຄງການ ຕ້ອງຕິດຕາມກວດກາ , ປະເມີນຜົນ, ສະຫຼຸບ ແລະ ລາຍງານ ຄວາມຄືບໜ້າ ແລະ ຜົນຂອງການຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃຫ້ແກ່ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ໂດຍຜ່ານ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ດັ່ງທີ່ລະບຸໄວ້ໃນ ມາດຕາ 23 ຂອງດຳລັດສະບັບນີ້;

- ໃນໄລຍະຈັດຕັ້ງປະຕິບັດສັນຍາ ຕ້ອງດຳເນີນການຕິດຕາມ ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດພັນທະ ໂດຍອີງໃສ່ເປົ້າໝາຍ, ລະດັບຄາດໝາຍ ແລະ ມາດຕະຖານຄຸນນະພາບ ທີ່ກຳນົດໄວ້ຢູ່ໃນ ສັນຍາໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

- ການລາຍງານຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດໂຄງການ ແລະ ສັນຍາ ຕ້ອງໄດ້ລາຍງານ ຢ່າງເປັນປົກກະຕິ, ເປັນໄຕມາດ, ເຄິ່ງປີ ແລະ ປີ ຕໍ່ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ໂດຍຜ່ານຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ.

**ມາດຕາ 62 ຄວາມຮັບຜິດຊອບຂອງ ບໍລິສັດໂຄງການ**

ບໍລິສັດໂຄງການ ຕ້ອງຕິດຕາມ ກວດກາ, ປະເມີນ, ສະຫຼຸບ ແລະ ລາຍງານ ຄວາມຄືບໜ້າ ແລະ ຜົນຂອງການຈັດຕັ້ງປະຕິບັດໂຄງການ ແລະ ສັນຍາລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຢ່າງເປັນປົກກະຕິ, ເປັນປະຈຳເດືອນ, ໄຕມາດ, ເຄິ່ງປີ ແລະ ປີ ໃຫ້ແກ່ ເຈົ້າຂອງໂຄງການ, ຂະແໜງການເງິນ, ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ, ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແລະ ຂະແໜງແຜນການ ແລະ ການລົງທຶນ.

**ມາດຕາ 63 ການກວດກາພາຍນອກ**

ອົງການກວດກາພາຍນອກ ປະກອບມີ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດຖະບານ, ອົງການກວດສອບແຫ່ງລັດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຊຶ່ງມີສິດກວດກາການຈັດຕັ້ງປະຕິບັດສັນຍາ ແລະ ໂຄງການ ລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕາມພາລະບົດບາດ.

ໃນກໍລະນີຈຳເປັນ, ອົງການກວດສອບເອກະລາດ ສາມາດກວດສອບ ຂະແໜງການ, ໜ່ວຍງານທີ່ຮັບຜິດຊອບ ວຽກງານໂຄງການລົງທຶນ ແລະ ການຈັດຕັ້ງປະຕິບັດ ສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນທຸກຂັ້ນຕອນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 13
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 64 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃນການຊຸກຍູ້ສົ່ງ ເສີມການລົງທຶນໃຫ້ສາມາດປະກອບສ່ວນ ເຂົ້າໃນການພັດທະນາເສດຖະກິດ - ສັງຄົມ ແລະ ປົກປັກ

ຮັກສາສິ່ງແວດລ້ອມ ຢ່າງມີປະສິດທິຜົນສູງຈະໄດ້ຮັບການຍ້ອງຍໍ ແລະ ການຕອບແທນທີ່ສົມເຫດສົມຜົນ ອີງຕາມລະບຽບການ.

**ມາດຕາ 65 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດ ດຳລັດສະບັບນີ້ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ, ຕັກເຕືອນ ແລະ ປະຕິບັດວິໄນ , ປັບໃໝໃຊ້ແທນທາງແພ່ງ, ດຳເນີນຄະດີ ແລ້ວແຕ່ກໍລະນີ ໜັກ ຫຼື ເບົາ ຕາມລະບຽບກົດໝາຍ ຂອງ ສປປ ລາວ.

ໃນກໍລະນີ ມີການສົມຮູ້ຮ່ວມຄິດ ກັບ ວິສາຫະກິດ ຫຼື ນິຕິບຸກຄົນໃນການອອກແບບ ແລະ ການກຳນົດລາຄາຂອງໜ້າວຽກ ຫຼື ໃນການຕົກລົງເຊັນສັນຍາທີ່ມີການອຳອຽງ ເພື່ອຮັບໃຊ້ສິດຜົນປະໂຫຍດຮ່ວມກັນ ຫຼື ຂອງຜູ້ດຽວ, ຊຶ່ງພາໃຫ້ເກີດຄວາມເສຍຫາຍ ຕໍ່ຊັບສິນຂອງ ລັດ ຫຼື ລວມໝູ່ ແມ່ນ ຈະຖືກດຳເນີນຄະດີ ແລະ ລົງໂທດຕາມກົດໝາຍຂອງ ສປປ ລາວ.

ໃນກໍລະນີ ຜູ້ທີ່ສົນໃຈ ຫຼື ຜູ້ເຂົ້າຮ່ວມປະມູນ ທີ່ມີພຶດຕິກຳຊື້ຈ້າງຈອບອອຍ ຫຼື ໃຫ້ສິນບົນ ເປັນວັດຖຸສິ່ງຂອງ ຫຼື ສິ່ງອື່ນໆ ໂດຍທາງກົງ ຫຼື ທາງອ້ອມ ໃຫ້ແກ່ ຄະນະກຳມະການປະມູນ ຫຼື ບຸກຄົນທີ່ມີສ່ວນ ໃນການຕັດສິນບັນຫາ ເພື່ອໃຫ້ຊະນະການປະມູນແບບບໍ່ໂປ່ງໃສ , ເຈົ້າຂອງໂຄງການ ສາມາດຕັດຜູ້ກະທຳຜິດດັ່ງກ່າວອອກຈາກການປະມູນ ໂດຍການເຫັນດີຈາກ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພ້ອມທັງບັນທຶກ ແລະ ແຈ້ງໃຫ້ຜູ້ເຂົ້າຮ່ວມແຂ່ງຂັນປະມູນທັງໝົດຮັບຊາບ ແລະ ດຳເນີນຄະດີຕາມກົດໝາຍ.

## ໝວດທີ 14
## ບົດບັນຍັດສຸດທ້າຍ

**ມາດຕາ 66 ການຈັດຕັ້ງປະຕິບັດ**

ບັນດາພາກສ່ວນທີ່ກ່ຽວຂ້ອງ, ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ , ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ , ບັນດາກະຊວງ, ອົງການທຽບເທົ່າ, ອົງການປົກຄອງທ້ອງຖິ່ນ ແລະ ບັນດາ ບໍລິສັດໂຄງການ, ຜູ້ພັດທະນາ ຫຼື ນັກລົງທຶນທີ່ມີສ່ວນຮ່ວມໃນໂຄງການລົງທຶນຮ່ວມ ລະຫວ່າງພາກລັດ ແລະ ພາກເອກະຊົນ ຕ້ອງປະຕິບັດຕາມດຳລັດ ແລະ ລະບຽບການຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 67 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດ ທາງລັດຖະການ ສິບຫ້າວັນ ວັນລັດຖະການ ເປັນຕົ້ນໄປ.

ດຳລັດສະບັບນີ້ ມີຜົນບັງຄັບໃຊ້ຕໍ່ບັນດາໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ນັບແຕ່ມື້ດຳລັດສະບັບນີ້ມີຜົນສັກສິດ. ສຳລັບໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນທີ່ໄດ້ຮັບການອະນຸມັດແລ້ວ ແມ່ນບໍ່ຈຳເປັນຕ້ອງມີການປະມູນຄືນ ແຕ່ການເຄື່ອນໄຫວ ຕ້ອງດຳເນີນພາຍໃຕ້ດຳລັດສະບັບນີ້.

ນິຕິກຳໃດທີ່ຢູ່ໃນລະດັບດຽວກັນ ຫຼື ຕ່ຳກວ່າ ຫາກຂັດກັບຂໍ້ກຳນົດຂອງດຳລັດສະບັບນີ້ ແມ່ນໃຫ້ຖືເອົາດຳລັດສະບັບນີ້ເປັນຫຼັກ.

ລັດຖະບານ ແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ